# ແຜນການຕ້ອນຮັບນັກທ່ອງທ່ຽວຈີນ









ກົມພັດທະນາການທ່ອງທ່ຽວ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ປີ 2023 - 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 273 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ 29 ມີນາ 2023

## ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງແຜນຕ້ອນຮັບນັກທ່ອງທ່ຽວຈີນ ສຳລັບປີ 2023-2025

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ຜົນຂອງກອງປະຊຸມລະຫວ່າງພາກລັດ-ພາກທຸລະກິດກ່ຽວກັບການຜ່ານຮ່າງແຜນຕ້ອນຮັບນັກທ່ອງທ່ຽວຈີນ ຄັ້ງວັນທີ 24 ກຸມພາ 2023 ທີ່ນະຄອນຫຼວງວຽງຈັນ.

## ລັດຖະມົນຕີ ຕົກລົງ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ແຜນຕ້ອນຮັບນັກທ່ອງທ່ຽວຈີນ ສຳລັບປີ 2023-2025;

ມາດຕາ 2 ມອບໃຫ້ຫ້ອງການກະຊວງ, ກົມພັດທະນາການທ່ອງທ່ຽວ, ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ, ກົມໂຄສະນາການທ່ອງທ່ຽວ, ກົມແຜນການ ແລະ ການຮ່ວມມືສາກົນ, ສະຖາບັນສົ່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ ສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ບັນດາແຂວງໃນທົ່ວປະເທດ ແລະ ພາກທຸລະກິດ ຮ່ວມມືກັນຈັດຕັ້ງປະຕິບັດແຜນຕ້ອນຮັບນັກທ່ອງທ່ຽວຈີນ ສຳລັບປີ 2023-2025 ໃຫ້ປະກົດຜົນເປັນຈິງ;

ມາດຕາ 3 ງົບປະມານນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນຕ້ອນຮັບນັກທ່ອງທ່ຽວຈີນສຳລັບປີ 2023-2025 ໃຫ້ຄົ້ນຄວ້ານຳໃຊ້ງົບປະມານຂອງລັດ ແລະ ການຊ່ວຍເຫຼືອຈາກພາກສ່ວນຕ່າງໆ;

ມາດຕາ 4. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສວນສະຫວັນ ວິຍະເກດ

## ສາລະບານ


1. ພາກສະເໜີ........................................................................................................ 1

2. ສະພາບລວມຂອງຕະຫຼາດທ່ອງທ່ຽວຈີນ.................................................................... 1

3. ການຄາດຄະເນຕະຫຼາດທ່ອງທ່ຽວຈີນໃນອະນາຄົດ........................................................ 2

4. ການກະກຽມຕ້ອນຮັບນັກທ່ອງທ່ຽວຈີນຂອງພາກພື້ນ ແລະ ສາກົນ..................................... 6

5. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກຂອງ ສປປ ລາວ.............................................................. 12

6. ແຜນກິດຈະກຳການຕ້ອນຮັບນັກທ່ອງທ່ຽວຈີນ ສຳລັບປີ 2023 (ໄລຍະສັ້ນ).......................... 14

7. ແຜນກິດຈະກຳຕ້ອນຮັບນັກທ່ອງທ່ຽວຈີນ ສຳລັບປີ 2023-2025 (ໄລຍະກາງ)...................... 21

## 1. ພາກສະເໜີ

ໃນໄລຍະກ່ອນທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19, ສປ ຈີນ ເປັນຕະຫຼາດທ່ອງທ່ຽວສາກົນທີ່ໃຫຍ່ທີ່ສຸດສໍາລັບຫຼາຍປະເທດໃນທົ່ວໂລກ. ຊຶ່ງໃນປີ 2019 ມີນັກທ່ອງທ່ຽວຈີນຫຼາຍກວ່າ 155 ລ້ານເທື່ອຄົນໄດ້ເດີນທາງໄປທ່ອງທ່ຽວຕ່າງປະເທດ. ແຕ່ໃນໄລຍະ 3 ປີທີ່ຜ່ານມາໄດ້ມີການແຜ່ລະບາດຂອງພະຍາດໂຄວິດ-19 ລັດຖະບານ ສປ ຈີນ ໄດ້ອອກມາດຕະການຈໍາກັດການເດີນທາງເຂົ້າ-ອອກປະເທດ ຈຶ່ງເຮັດໃຫ້ຕົວເລກຂອງນັກທ່ອງທ່ຽວຂາອອກຂອງຈີນຫຼຸດລົງຫຼາຍ. ແຕ່ເຖິງຢ່າງໃດກໍຕາມ, ມາຮອດປັດຈຸບັນລັດຖະບານຈີນໄດ້ມີນະໂຍບາຍຜ່ອນຜັນໃຫ້ພົນລະເມືອງຈີນສາມາດເດີນທາງອອກນອກປະເທດໄດ້ ຊຶ່ງຄາດວ່າຄົນຈີນຈໍານວນຫຼາຍລ້ານຄົນມີຄວາມຕັ້ງໃຈທີ່ຈະເດີນທາງອອກໄປທ່ອງທ່ຽວຕ່າງປະເທດ. ດ້ວຍເຫດຜົນດັ່ງກ່າວ, ຄາດວ່າການເດີນທາງໄປທ່ຽວຕ່າງປະເທດຂອງນັກທ່ອງທ່ຽວຈີນ ຈະຊ່ວຍເຮັດໃຫ້ສະພາບການທ່ອງທ່ຽວໂລກມີທ່າອ່ຽງກັບຄືນມາມີບັນຍາກາດຟື້ນຟູອີກຄັ້ງ.

ແຜນກະກຽມຕ້ອນຮັບນັກທ່ອງທ່ຽວສະບັບນີ້ໄດ້ສ້າງຂຶ້ນ ເພື່ອເປັນບ່ອນອີງໃຫ້ແກ່ພາກລັດ ແລະ ພາກທຸລະກິດທັງສູນກາງ ແລະ ທ້ອງຖິ່ນ ເປັນຂໍ້ມູນພື້ນຖານເພື່ອກະກຽມການບໍລິການຕ້ອນຮັບນັກທ່ອງທ່ຽວຈີນ (ຕະຫຼາດຈີນ) ຢູ່ໃນ ສປປ ລາວ ເປັນຕົ້ນແມ່ນ: ທ່າອ່ຽງ ແລະ ໂອກາດທີ່ນັກທ່ອງທ່ຽວຈີນຈະເຂົ້າມາທ່ອງທ່ຽວຢູ່ ສປປ ລາວ ລວມເຖິງຄວາມສ່ຽງທີ່ອາດຈະເກີດຂຶ້ນ ໂດຍສະເພາະແມ່ນການທ່ອງທ່ຽວໃນຮູບແບບທົວສູນຫຼຽນ (zero-dollar tourism). ນອກຈາກນັ້ນ, ແຜນສະບັບນີ້ ຍັງໄດ້ສັງລວມບາງນະໂຍບາຍ ແລະ ແຜນການຕ້ອນຮັບນັກທ່ອງທ່ຽວຈີນຂອງບັນດາປະເທດຕ່າງໆໃນພາກພື້ນ ແລະ ສາກົນ.

ເພື່ອເປັນການຮອງຮັບການປ່ຽນແປງຂອງອຸດສະຫາກໍາການທ່ອງທ່ຽວ ເນື່ອງຈາກສະພາບການຂອງຕະຫຼາດນັກທ່ອງທ່ຽວມີການປ່ຽນແປງຢູ່ຕະຫຼອດເວລາ. ສະນັ້ນ ເອກະສານສະບັບນີ້ອາດຈະມີການປັບປຸງ ແລະ ດັດປັບເປັນແຕ່ລະໄລຍະເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

## 2. ສະພາບລວມຂອງຕະຫຼາດທ່ອງທ່ຽວຈີນ

ໃນໄລຍະກ່ອນທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19, ນັກທ່ອງທ່ຽວຈີນຖືວ່າແມ່ນຕະຫຼາດທ່ອງທ່ຽວໜຶ່ງທີ່ສໍາຄັນຂອງ ສປປ ລາວ ຊຶ່ງໃນປີ 2019 ມີນັກທ່ອງທ່ຽວຈີນເດີນທາງເຂົ້າມາທ່ອງທ່ຽວຢູ່ ສປປ ລາວ ຈໍານວນ 1.022.727 ເທື່ອຄົນ ຊຶ່ງກວມເອົາ 20 % ຂອງຈໍານວນນັກທ່ອງທ່ຽວສາກົນທັງໝົດ. ພ້ອມນີ້ລາຍຮັບຈາກການທ່ອງທ່ຽວໄດ້ກາຍເປັນແຫຼ່ງລາຍຮັບຕົ້ນຕໍອັນດັບທີ 2 ທີ່ປະກອບເຂົ້າໃນເສດຖະກິດຂອງປະເທດ (ກົມພັດທະນາການທ່ອງທ່ຽວ ປີ 2019). ນອກຈາກນັ້ນ, ໃນປີ 2019. ສປປ ລາວ ແລະ ສປ ຈີນ ໄດ້ສ້າງຂະບວນການປີທ່ອງທ່ຽວລາວ-ຈີນ ຂຶ້ນ (Visit Laos-China Year-2019) ເພື່ອເປັນການສົ່ງເສີມ ແລະ ດຶງດູດເອົານັກທ່ອງທ່ຽວຈີນໃຫ້ເຂົ້າມາທ່ອງທ່ຽວໃຫ້ຫຼາຍຂຶ້ນ.

ສໍາລັບການເດີນທາງຂອງນັກທ່ອງທ່ຽວຈີນທີ່ເຂົ້າມາທ່ອງທ່ຽວຢູ່ ສປປ ລາວ ໂດຍສ່ວນໃຫຍ່ໄດ້ເຂົ້າມາໃນ 3 ຮູບແບບ ຄື: ເຂົ້າມາດ້ວຍເຮືອບິນ (ທາງອາກາດ), ມາແບບເປັນກຸ່ມ ໂດຍນໍາໃຊ້ບໍລິການຜ່ານບໍລິສັດທ່ອງທ່ຽວ

(ລົດບັດ) ແລະ ມາແບບເປັນຄາລະວານ (ລົດສ່ວນຕົວ) ແລະ ທີ່ສຳຄັນ ໃນປີ 2019 ມີນັກທ່ອງທ່ຽວຈີນໄດ້ເດີນທາງເຂົ້າມາ ສປປ ລາວ ດ້ວຍເຮືອບິນ ຈຳນວນ 217.770 ເທື່ອຄົນ ຊຶ່ງສາເຫດອາດເນື່ອງມາຈາກ ສປປ ລາວ ໄດ້ເພີ່ມສາຍການບິນໂດຍກົງຫຼາຍເສັ້ນທາງລະຫວ່າງລາວ-ຈີນ ເຊັ່ນ: ເມືອງສາງຊາ, ເມືອງສາງໂຈ່, ເມືອງເຊີນຕູ່, ເມືອງຫາງໂຈ່, ຊຽງໄຮ້, ກວາງໂຈ ແລະ ຄຸນໝິງ (ການບິນລາວ ປີ 2019). ນັກທ່ອງທ່ຽວກຸ່ມນີ້ໃຊ້ເວລາທ່ອງທ່ຽວຢູ່ ສປປ ລາວ ປະມານ 2-8 ວັນ. ສ່ວນນັກທ່ອງທ່ຽວທີ່ເຂົ້າມາຜ່ານທາງຊາຍແດນ, ທາງບົກ (ດ່ານສາກົນຕ່າງໆ) ໂດຍສະເລ່ຍແລ້ວ ແມ່ນໃຊ້ເວລາທ່ອງທ່ຽວຢູ່ ສປປ ລາວ ປະມານ 3-4 ວັນ.

ອີງຕາມຂໍ້ມູນໃນປີ 2019 ປະຊາກອນຈີນທີ່ຖືປັດສະປໍ (passport) ມີຈຳນວນ 10% ຂອງຈຳນວນ 1,4 ຕື້ຄົນ, ໄດ້ໃຊ້ຈ່າຍໃນການທ່ອງທ່ຽວຢູ່ຕ່າງປະເທດຫຼາຍກວ່າ 120 ຕື້ໂດລາສະຫາລັດ. ໃນເມື່ອກ່ອນ ຫຼາຍຄົນອາດຄິດວ່າຕະຫຼາດນັກທ່ອງທ່ຽວຈີນເປັນຕະຫຼາດນັກທ່ອງທ່ຽວທີ່ມີຄ່າໃຊ້ຈ່າຍຕ່ຳ ແລະ ໄປທ່ອງທ່ຽວເປັນກຸ່ມໃຫຍ່, ແຕ່ໃນປັດຈຸບັນ ນັກທ່ອງທ່ຽວຈີນມີທ່າອ່ຽງທີ່ຈະໄປທ່ຽວໄປກຸ່ມນ້ອຍ, ທ່ອງທ່ຽວແບບອິດສະຫຼະ ແລະ ຄ່າໃຊ້ຈ່າຍໃນການເດີນທາງກໍສູງຂຶ້ນ. ອີງຕາມ (ຂໍ້ມູນຈາກ TAT heading, 2023) ໄດ້ຊີ້ໃຫ້ເຫັນວ່ານັກທ່ອງທ່ຽວຈີນທີ່ມາທ່ອງທ່ຽວເປັນກຸ່ມໃຫຍ່ເຂົ້າມາທ່ອງທ່ຽວຢູ່ປະເທດໄທກວມເອົາ 40%. ນັກທ່ອງທ່ຽວຈີນສ່ວນໃຫຍ່ຈະເດີນທາງໄປທ່ອງທ່ຽວເປັນກຸ່ມໃຫຍ່ ແມ່ນຈະເດີນທາງໄປທ່ອງທ່ຽວຄັ້ງທຳອິດເທົ່ານັ້ນ, ສ່ວນຄັ້ງຕໍ່ໄປ ແມ່ນຈະເດີນທາງທ່ອງທ່ຽວເປັນກຸ່ມນ້ອຍລົງມາ ຫຼື ເດີນທາງດ້ວຍຕົນເອງ.

ເຖິງຢ່າງໃດກໍຕາມ, ຕະຫຼອດໄລຍະເກືອບ 3 ປີທີ່ຜ່ານມາ, ລັດຖະບານຈີນ ໄດ້ອອກມາດຕະການຈຳກັດການເດີນທາງເຂົ້າ-ອອກປະເທດ ຈີນມາເຖິງວັນທີ 6 ກຸມພາ 2023 ລັດຖະບານຈີນໄດ້ມີນະໂຍບາຍຜ່ອນຜັນໃຫ້ພົນລະເມືອງຈີນສາມາດເດີນທາງໄປຕ່າງປະເທດໄດ້ ເຖິງ 20 ປະເທດ ຊຶ່ງໜຶ່ງໃນນັ້ນກໍແມ່ນ ສປປ. ດັ່ງນັ້ນ, ຈຶ່ງຄາດຄະເນໄດ້ວ່ານັກທ່ອງທ່ຽວຈີນຈະເດີນທາງເຂົ້າມາທ່ອງທ່ຽວ ສປປ ລາວ ໃນຈຳນວນທີ່ເພີ່ມຂຶ້ນ.

## 3. ການຄາດຄະເນຕະຫຼາດນັກທ່ອງທ່ຽວຈີນໃນອະນາຄົດ

ອີງຕາມການຄົ້ນຄວ້າຂອງບັນດານັກຊ່ຽວຊານໄດ້ກ່າວວ່າ ສຳລັບໄຕມາດທຳອິດຂອງປີ 2023 ຈຳນວນຕົວເລກນັກທ່ອງທ່ຽວຈີນທີ່ເດີນທາງອອກໄປຕ່າງປະເທດ ອາດຈະຍັງບໍ່ຫຼາຍປານໃດ ເນື່ອງຈາກວ່າສາຍການບິນທີ່ເດີນທາງເຂົ້າ-ອອກ ສປ ຈີນ ໃນປັດຈຸບັນມີພຽງແຕ່ 10% ຖ້າທຽບໃສ່ໄລຍະກ່ອນໂຄວິດ. ຫຼາຍສາຍການບິນຈະຕ້ອງໄດ້ເຮັດສັນຍາ ແລະ ຂໍ້ຕົກລົງຕ່າງໆຄືນໃໝ່ ເພື່ອຂໍອະນຸມັດໃນການເຂົ້າ-ອອກ ແລະ ຄາດວ່າໃນໄຕມາດທີ 2 ຫຼື ໄຕມາດທີ 3 ຂອງປີ 2023 ຈຳນວນຕົວເລກນັກທ່ອງທ່ຽວຈີນທີ່ເດີນທາງໄປຕ່າງປະເທດຈະເພີ່ມຂຶ້ນຕາມລຳດັບ.

ສະຖາບັນຄົ້ນຄວ້າການທ່ອງທ່ຽວຕ່າງປະເທດຂອງຈີນ (COTRI) ໄດ້ຄາດຄະເນວ່າ ໃນປີ 2023 ຈະມີນັກທ່ອງທ່ຽວຈີນເດີນທາງໄປຕ່າງປະເທດປະມານ 56 ລ້ານເທື່ອຄົນ ຊຶ່ງສ່ວນໃຫຍ່ຈະເດີນທາງໄປບັນດາປະເທດໃນເຂດອາຊີຕາເວັນອອກສຽງໃຕ້ ແລະ ສະພາບການຂອງຕະຫຼາດນັກທ່ອງທ່ຽວຈີນຈະກັບຄືນມາສູ່ສະພາບປົກກະຕິພາຍໃນປີ 2024, ການເດີນທາງທ່ອງທ່ຽວສ່ວນຫຼາຍຈະໄປເປັນແບບຄອບຄົວ, ການເດີນທາງໄປສຶກສາຮ່ຳຮຽນ ແລະ ໄປເຮັດທຸລະກິດຕ່າງໆ.

ອີງຕາມຂໍ້ມູນຈາກ China i2i Group (RESTART YOUR CHINA TRAVEL BUSINESS 2023) ໃຫ້ຮູ້ວ່າ ໃນໄລຍະປີ 2023 ນັກທ່ອງທ່ຽວຈີນສ່ວນໃຫຍ່ທີ່ຈະເດີນທາງໄປຕ່າງປະເທດ ແມ່ນກຸ່ມນັກທ່ອງທ່ຽວແບບອິດສະຫຼະ (FIT) ເພື່ອສະແຫວງຫາປະສົບການໃໝ່ ເປັນຕົ້ນແມ່ນສຳພັດກັບວິຖີຊີວິດການເປັນຢູ່ຂອງຊຸມຊົນ, ຮຽນຮູ້ກັບວັດທະນະທຳໃໝ່, ທົດລອງອາຫານທີ່ເປັນເອກະລັກຂອງແຕ່ລະທ້ອງຖິ່ນ. ນອກຈາກນັ້ນ, ສະຖາບັນດັ່ງກ່າວ ຍັງໄດ້ສະແດງຜົນຂອງການສຳຫຼວດກ່ຽວກັບຄວາມຕ້ອງການຂອງຄົນຈີນຜ່ານ WECHAT ຫຼາຍກ່ວາ 10.000 ຄົນ ກ່ຽວກັບການເດີນທາງໄປທ່ອງທ່ຽວຕ່າງປະເທດ ຊຶ່ງຜົນຂອງການສອບຖາມ 89% ມີຄວາມພ້ອມທີ່ຈະເດີນທາງໄປຕ່າງປະເທດ, ຫຼາຍກ່ວາ 52% ຕ້ອງການທີ່ພັກທີ່ໄດ້ມາດຕະຖານ, ມີຄວາມສະດວກສະບາຍ (ໂຮງແຮມດັບ 4-5 ດາວ). ໃນໄລຍະປີ 2023, ເດືອນມິຖຸນາ ແລະ ເດືອນຕຸລາ ເປັນເດືອນທີ່ນັກທ່ອງທ່ຽວຈີນຕ້ອງການເດີນທາງຫຼາຍທີ່ສຸດ ກວມເອົາ 87%.

ໃນໄລຍະກ່ອນການແຜ່ລະບາດຂອງພະຍາດໂຄວິດ-19 ປະຊາຊົນຈີນນິຍົມໃນການຖືເງິນສົດເປັນສ່ວນໃຫຍ່ ແລະ ການຈຳກັດໃນການເດີນທາງໃນໄລຍະລ໋ອກດາວ (Lockdown) ກໍສົ່ງຜົນໃຫ້ມີການຈຳກັດໃນການໃຊ້ຈ່າຍເຊັ່ນດຽວກັນ. ດັ່ງນັ້ນ, ພາຍຫຼັງທີ່ລັດຖະບານຈີນໄດ້ມີນະໂຍບາຍຜ່ອນຜັນໃຫ້ພົນລະເມືອງຈີນ ສາມາດເດີນທາງອອກນອກປະເທດໄດ້ ກໍຈະເຮັດໃຫ້ປະຊາຊົນມີຄວາມຕ້ອງການທີ່ຈະເດີນທາງໄປຕ່າງປະເທດ ເພື່ອທ່ອງທ່ຽວ ແລະ ໃຊ້ຈ່າຍຕ່າງໆ ເພື່ອເປັນການຊົດເຊີຍກັບການເກັບຕົວໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19. ແຕ່ເຖິງແນວກໍຕາມ, ການທ່ອງທ່ຽວອາດຈະໄດ້ຮັບຜົນກະທົບຈາກບັນຫາທາງດ້ານເສດຖະກິດຂອງໂລກ ຊຶ່ງອາດຈະເຮັດໃຫ້ລາຄາຂອງລາຍການທ່ອງທ່ຽວສູງຂຶ້ນ ກ່ອນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19.

### ❖ ການທ່ອງທ່ຽວສູນຫຼຽນ

ອີງຕາມບົດຮຽນຂອງຫຼາຍໆປະເທດໃນໄລຍະຜ່ານມາ, ບັນຫາຂອງທົວສູນຫຼຽນ “zero-dollar tours” ແມ່ນຜູ້ປະກອບການທ່ອງທ່ຽວຢູ່ຈີນເປັນຜູ້ຂາຍລາຍການທ່ອງທ່ຽວໃນລາຄາທີ່ຖືກກວ່າລາຄາທົ່ວໄປ. ເມື່ອມາຮອດປະເທດປາຍທາງແລ້ວ ເວລານັກທ່ອງທ່ຽວໄປໃຊ້ຈ່າຍຢູ່ຕາມຮ້ານອາຫານ, ໂຮງແຮມ ແລະ ຮ້ານຄ້າຕ່າງໆ ບໍລິສັດນຳທ່ຽວກໍຈະໄດ້ຮັບເງິນເປີເຊັນຈາກຜູ້ປະກອບການ ຊຶ່ງຜູ້ປະກອບການເຫຼົ່ານັ້ນສ່ວນຫຼາຍຈະແມ່ນຄົນຈີນເປັນເຈົ້າຂອງທຸລະກິດ ແລະ ການຊຳລະຄ່າໃຊ້ຈ່າຍຕ່າງໆແມ່ນຊຳລະຜ່ານລະບົບທະນາຄານຂອງຈີນ ເຊັ່ນ: Alipay and WeChat Pay (ບໍ່ຊຳລະຜ່ານລະບົບທະນາຄານຂອງປະເທດເຈົ້າພາບ). ນອກຈາກນັ້ນ, ບາງຄັ້ງການກຳນົດລາຄາສິນຄ້າ ແລະ ການໃຫ້ບໍລິການແມ່ນມີລາຄາສູງເກີນກວ່າລາຄາປົກກະຕິ ແຕ່ບໍ່ຮັບປະກັນດ້ານສິນຄ້າ ແລະ ການບໍລິການ. ສະພາບການໃຫ້ບໍລິການການນຳທ່ຽວແບບສູນຫຼຽນ ແມ່ນໄດ້ຮັບຄວາມຕ້ອງການຫຼາຍພໍສົມຄວນຂອງກຸ່ມນັກທ່ອງທ່ຽວຈີນ. ນັກທ່ອງທ່ຽວທີ່ມາທ່ອງທ່ຽວໃນຮູບແບບນີ້ ໂດຍສ່ວນຫຼາຍແລ້ວຈະບໍ່ສາມາດເວົ້າພາສາອັງກິດ ຫຼື ພາສາຕ່າງປະເທດໄດ້. ດັ່ງນັ້ນ, ເວລາພົບກັບບັນຫາຕ່າງໆນັກທ່ອງທ່ຽວເຫຼົ່ານີ້ກໍບໍ່ສາມາດທີ່ຈະລາຍງານ ຫຼື ແຈ້ງຕໍ່ກັບເຈົ້າໜ້າທີ່ຂອງປະເທດນັ້ນໄດ້.

ຕົວຢ່າງ: ໃນປີ 2016 ປະເທດໄທ ໄດ້ແກ້ໄຂບັນດາຜູ້ປະກອບການທຸລະກິດທີ່ເຄື່ອນໄຫວການທ່ອງທ່ຽວຫົວສູນຫຼຽນ ໂດຍສະເພາະແມ່ນນັກທ່ອງທ່ຽວຈີນ. ອົງການທ່ອງທ່ຽວແຫ່ງປະເທດໄທ ໄດ້ສົມທົບກັບອົງການທ່ອງທ່ຽວແຫ່ງປະເທດຈີນ ປຶກສາຫາລືກັນ ແລະ ໄດ້ຕົກລົງກັນກ່ຽວກັບລາຄາກາງໃນການຈຳໜ່າຍລາຍການທ່ອງທ່ຽວໃຫ້ແກ່ບັນກາຜູ້ປະກອບການທຸລະກິດທ່ອງທ່ຽວ ເຊັ່ນ: ລາຍການທ່ອງທ່ຽວ 1 ວັນ ກຳນົດລາຄາຕໍ່າສຸດ 1.000 ບາດ/ຄົນ/ວັນ, ລາຍການທ່ອງທ່ຽວ 3 ວັນ ກຳນົດລາຄາຕໍ່າສຸດ 6.000 ບາດ/ຄົນ/ວັນ ແລະ ລາຍການທ່ອງທ່ຽວທີ່ເປັນທາງເລືອກກຳນົດລາຄາຕໍ່າສຸດ 3.000 ບາດ/ຄົນ/ວັນ. ໃນໄລຍະດັ່ງກ່າວນັ້ນ, ເຈົ້າໜ້າທີ່ໄດ້ກວດກາ ແລະ ດຳເນີນການທາງດ້ານລະບຽບກົດໝາຍຕໍ່ບັນດາຜູ້ປະກອບການທີ່ດຳເນີນທຸລະກິດແບບຜິດກົດໝາຍ (ຜູ້ທີ່ບໍ່ໄດ້ຮັບການອະນຸຍາດຖືກຕ້ອງຕາມກົດໝາຍ ແລະ ດຳເນີນການທ່ອງທ່ຽວແບບຫົວສູນຫຼຽນ).

ຈາກຜົນຂອງການດຳເນີນມາດຕະການດັ່ງກ່າວ, ບັນດາຜູ້ປະກອບການທຸລະກິດທີ່ເຄື່ອນໄຫວການທ່ອງທ່ຽວແບບສູນຫຼຽນ ໄດ້ເຮັດໃຫ້ຈຳນວນຂອງນັກທ່ອງທ່ຽວຈີນທີ່ເດີນທາງເຂົ້າມາທ່ອງທ່ຽວປະເທດໄທໄດ້ຫຼຸດລົງຈຳນວນຫຼາຍ, ນັກທ່ອງທ່ຽວຈີນຫຼາຍແສນຄົນໄດ້ຍົກເລີກລາຍການທ່ອງທ່ຽວທີ່ຈະມາທ່ອງທ່ຽວປະເທດໄທ. ການຫຼຸດລົງຫຼາຍຂອງຈຳນວນນັກທ່ອງທ່ຽວຈີນ ໄດ້ສົ່ງຜົນກະທົບຕໍ່ຜູ້ປະກອບການທຸລະກິດທ່ອງທ່ຽວພາຍໃນ. ດັ່ງນັ້ນ, ລັດຖະບານໄທ ຈຶ່ງໄດ້ມີນະໂຍບາຍຫຼຸດຜ່ອນຄ່າວີຊາໃຫ້ແກ່ນັກທ່ອງທ່ຽວຈີນ ເພື່ອກະຕຸ້ນ ແລະ ດຶງດູດໃຫ້ນັກທ່ອງທ່ຽວຈີນໃຫ້ກັບຄືນມາທ່ອງທ່ຽວປະເທດໄທອີກຄັ້ງ.

ຢູ່ເກາະບາຫຼີ ປະເທດອິນໂດເນເຊຍ, ເຈົ້າໜ້າທີ່ຕຳຫຼວດ ແລະ ທ່ອງທ່ຽວ ໄດ້ກວດສອບ ແລະ ພົບເຫັນຫົວໜ່ວຍທຸລະກິດຂອງຄົນຈີນທີ່ມີສ່ວນກ່ຽວຂ້ອງໃນການເຄື່ອນໄຫວນຳທ່ຽວແບບສູນຫຼຽນ. ດັ່ງນັ້ນ, ເຈົ້າໜ້າທີ່ຈຶ່ງໄດ້ສັ່ງປິດກິດຈະການທີ່ເຄື່ອນໄຫວ ຫຼື ມີສ່ວນກ່ຽວຂ້ອງກັບການນຳທ່ຽວແບບສູນຫຼຽນ. ສະມາຄົມທຸລະກິດທ່ອງທ່ຽວຂອງປະເທດອິນໂດເນເຊຍ ໄດ້ປະສານສົມທົບກັບອົງການທ່ອງທ່ຽວແຫ່ງປະເທດຈີນ ໄດ້ສັງລວມລາຍຊື່ບັນດາບໍລິສັດທ່ອງທ່ຽວທີ່ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ບໍລິສັດທີ່ບໍ່ໄດ້ຮັບອະນຸຍາດ (ບໍລິສັດເຖື່ອນ) ເພື່ອແຈ້ງໃຫ້ແກ່ນັກທ່ອງທ່ຽວໄດ້ຮັບຊາບຂໍ້ມູນດັ່ງກ່າວ.

ໃນປີ 2013, ຢູ່ຮົງກົງ, ການເຄື່ອນໄຫວຂອງການທ່ອງທ່ຽວຮູບແບບນີ້ ຖືກເອີ້ນວ່າ "ການບັງຄັບໃຫ້ນັກທ່ອງທ່ຽວໃຊ້ຈ່າຍຊື້ເຄື່ອງຕ່າງໆ (forced shopping). ດັ່ງນັ້ນ, ເພື່ອຈຳກັດການເຄື່ອນໄຫວການນຳທ່ຽວຮູບແບບດັ່ງກ່າວ, ຮົງກົງ ແລະ ຈີນແຜ່ນດິນໃຫຍ່ (Main Land China) ໄດ້ຮ່ວມມືກັນຈຳກັດ ແລະ ໄດ້ສັ່ງຫ້າມບໍ່ໃຫ້ກຸ່ມນັກທ່ອງທ່ຽວດັ່ງກ່າວເຂົ້າໄປຮົງກົງ ແລະ ມາເກົາ.

ນັກຊ່ຽວຊານການທ່ອງທ່ຽວຢູ່ປະເທດຈີນໄດ້ມີຄຳເຫັນວ່າ ບົດຮຽນໄດ້ຮັບຜົນ ແລະ ມີປະສິດທິພາບທີ່ດີທີ່ສຸດໃນການຈຳກັດ ແລະ ຄຸ້ມຄອງການເຄື່ອນໄຫວທຸລະກິດການທ່ອງທ່ຽວແບບຫົວສູນຫຼຽນ ແມ່ນຕ້ອງໄດ້ປະສານສົມທົບ ແລະ ຮ່ວມມືກັບອົງການທ່ອງທ່ຽວແຫ່ງປະເທດຈີນ ເພື່ອກຳນົດກົນໄກໃນການຄຸ້ມຄອງ ແລະ ກຳນົດມາດຕະການຕໍ່ຜູ້ກະທຳຜິດ ເຊັ່ນ: ປັບໄໝ, ຈຳຄຸກ ຫຼື ວິທີການອື່ນໆ. ນັກທ່ອງທ່ຽວທີ່ຈະເລືອກເດີນທາງທ່ອງທ່ຽວໃນຮູບແບບດັ່ງກ່າວນີ້ມີທ່າອ່ຽງຄ່ອຍໆຈະຫຼຸດລົງ, ອາດຈະຍັງມີພຽງແຕ່ນັກທ່ອງທ່ຽວທີ່ມາຈາກຕົວເມືອງນ້ອຍຕ່າງໆ ທີ່ຍັງບໍ່ຮັບຮູ້ຂໍ້ມູນຂ່າວສານພຽງພໍ ທີ່ຈະເດີນທາງໄປທ່ອງທ່ຽວໃນຮູບແບບຫົວສູນຫຼຽນ.

❖ **ບັນດາທ່ານຜູ້ຊ່ຽວຊານໄດ້ແນະນຳ 5 ແນວທາງຈັດຕັ້ງປະຕິບັດ ເພື່ອກະກຽມຕ້ອນຮັບນັກທ່ອງທ່ຽວຈີນ ດັ່ງນີ້:**

1. **ກະກຽມຄວາມພ້ອມໃນການຕ້ອນຮັບນັກທ່ອງທ່ຽວກຸ່ມຕ່າງໆ**: ຈຳນວນຂອງປະຊາກອນຈີນມີຫຼາຍຕື້ຄົນ ແນ່ນອນວ່າແຕ່ລະກຸ່ມຄົນກໍຈະມີພຶດຕິກຳ ແລະ ຈຸດພິດເສດທີ່ແຕກຕ່າງກັນ. ດັ່ງນັ້ນ, ກຸ່ມນັກທ່ອງທ່ຽວທີ່ຈະເຂົ້າມາທ່ອງທ່ຽວກໍຈະມີພຶດຕິກຳທີ່ແຕກຕ່າງກັນ. ນັກທ່ອງທ່ຽວທີ່ຈະເຂົ້າມາໃນໄລຍະທຳອິດອາດຈະເປັນກຸ່ມນັກທ່ອງທ່ຽວທີ່ມາແບບອິດສະຫຼະ ເພື່ອຊອກຫາປະສົບການ ແລະ ກຸ່ມນັກທ່ອງທ່ຽວທີ່ມີຄວາມອາດສາມາດໃຊ້ຈ່າຍສູງ.
2. **ການທ່ອງທ່ຽວແບບເປັນກຸ່ມໃຫຍ່**: ໃນອະນາຄົດການທ່ອງທ່ຽວເປັນກຸ່ມໃຫຍ່ ຈະແມ່ນນັກທ່ອງທ່ຽວທີ່ມາຈາກບັນດາຕົວເມືອງນ້ອຍຕ່າງໆ ແລະ ນັກທ່ອງທ່ຽວກຸ່ມນີ້ຍັງບໍ່ເຄີຍເດີນທາງທ່ອງທ່ຽວຕ່າງປະເທດມາກ່ອນ. ສ່ວນນັກທ່ອງທ່ຽວທີ່ມາຈາກບັນດາເມືອງໃຫຍ່ໆແມ່ນຈະເລືອກເດີນທາງທ່ອງທ່ຽວເປັນກຸ່ມນ້ອຍ ຫຼື ທ່ອງທ່ຽວແບບເປັນອິດສະຫຼະ. ດັ່ງນັ້ນ, ການທີ່ຈະເຂົ້າເຖິງ ແລະ ດຶງດູດນັກທ່ອງທ່ຽວກຸ່ມນີ້ ວິທີການໃນການໂຄສະນາເປັນທີ່ນິຍົມກັນກໍຄືການໂຄສະນາກ່ຽວກັບວິຖີການດຳລົງຊີວິດ ຊຶ່ງມັນໄດ້ສະແດງໃຫ້ເຫັນເຖິງຄວາມເປັນເອກະລັກຂອງແຕ່ລະທ້ອງຖິ່ນ. ໜ່ວຍງານທາງດ້ານການຕະຫຼາດຂອງຈີນໄດ້ເຮັດການສຳຫຼວດກຸ່ມຕົວຢ່າງກ່ຽວກັບຈຸດປະສົງ ແລະ ຄວາມດຶງດູດໃຈຂອງນັກທ່ອງທ່ຽວຈີນ ຊຶ່ງຜົນຂອງກຸ່ມຕົວຢ່າງ 2/3 ໄດ້ສະແດງໃຫ້ເຫັນວ່າ ສິ່ງທີ່ດຶງດູດໃຈໃນການເດີນທາງຂອງພວກເຂົາ ແມ່ນເພື່ອສຳພັດກັບວິຖີຊີວິດ ແລະ ກິນອາຫານທີ່ເປັນເອກະລັກຂອງແຕ່ລະທ້ອງຖິ່ນ.
3. **ຄວາມປອດໄພ:** ສິ່ງໜຶ່ງທີ່ສຳຄັນທີ່ສຸດນອກຈາກບັນຫາເລື່ອງລາຄາການບໍລິການແລ້ວ ນັກທ່ອງທ່ຽວຈີນຍັງໃຫ້ຄວາມໃສ່ໃຈເລື່ອງຄວາມປອດໄພຢູ່ແຕ່ລະຈຸດໝາຍປາຍທາງການທ່ອງທ່ຽວ ໂດຍສະເພາະແມ່ນກຸ່ມນັກທ່ອງທ່ຽວທີ່ເດີນທາງແບບອິດສະຫຼະ ແລະ ອາດຈະເປັນກຸ່ມທຳອິດທີ່ເດີນທາງໄປຕ່າງປະເທດ. ສະນັ້ນ, ເມື່ອເວລາພວກເຂົາເດີນທາງກັບປະເທດ ກໍຈະໄດ້ເລົ່າ ແລະ ຖ່າຍທອດປະສົບການຕ່າງໆຈາກການທ່ອງທ່ຽວຢູ່ ສປປ ລາວ ໃຫ້ແກ່ກຸ່ມນັກທ່ອງທ່ຽວອື່ນໆຮັບຮູ້ຂໍ້ມູນ. ດັ່ງນັ້ນ ຖ້າຫາກພວກເຂົາໃຫ້ຮັບການບໍລິການທີ່ດີ, ບໍ່ຖືກເອົາປຽບ ແລະ ຮູ້ສຶກປອດໄພ ແນ່ນອນວ່າເຂົາເຈົ້າກໍຈະຖ່າຍທອດຂໍ້ມູນນີ້ໃຫ້ແກ່ນັກທ່ອງທ່ຽວກຸ່ມອື່ນໆເຂົ້າມາທ່ອງທ່ຽວໃນອະນາຄົດ.
4. **ການໃຫ້ບໍລິການທີ່ເໝາະສົມກັບລາຄາ:** ກ່ອນການລະບາດຂອງພະຍາດໂຄວິດ 19, ການໃຊ້ຈ່າຍແບບຟຸມເຟືອຍ ຖືວ່າເປັນເລື່ອງປົກກະຕິຂອງນັກທ່ອງທ່ຽວຈີນ. ແຕ່ໃນປັດຈຸບັນ, ການໃຊ້ຈ່າຍຂອງນັກທ່ອງທ່ຽວຈີນໄດ້ແຕກຕ່າງຈາກເມື່ອກ່ອນ ຍ້ອນຄ່າໃຊ້ຈ່າຍໃນການເດີນທາງທີ່ສູງຂຶ້ນ ຊຶ່ງພວກເຂົາຈະຄຳນຶ່ງເຖິງສິ່ງທີ່ເຂົາຈະໄດ້ຮັບມັນຄຸ້ມຄ່າກັບລາຄາທີ່ພວກເຂົ້າຕ້ອງຈ່າຍແລ້ວບໍ ໂດຍສະເພາະແມ່ນໄດ້ຮັບປະສົບການທີ່ດີ. ນອກຈາກນັ້ນ, ຖ້າທຽບໃສ່ກັບນັກທ່ອງທ່ຽວຈາກເອີຣົບ, ອາເມລິກາ ແລະ ນັກທ່ອງທ່ຽວຈີນ ກ່ຽວກັບການໃຊ້ຈ່າຍເພີ່ມເຕີມເພື່ອປົກປັກຮັກສາສິ່ງແວດລ້ອມ ນັກທ່ອງທ່ຽວຈີນມີຄວາມພ້ອມ ແລະ ເຕັມໃຈທີ່ຈະຈ່າຍຫຼາຍກວ່ານັກທ່ອງທ່ຽວຈາກ ເອີຣົບ, ອາເມລິກາ. ຜົນການສຳຫຼວດນັກທ່ອງທ່ຽວຈີນ 88% ແມ່ນໃຫ້ຄວາມສຳຄັນ ແລະ ເປັນຫ່ວງຕໍ່ກັບຜົນກະທົບທາງດ້ານລົບຕໍ່ກັບຈຸດໝາຍປາຍທາງການທ່ຽວທີ່ພວກເຂົາເດີນທາງໄປທ່ອງທ່ຽວ.

5. **ການຫຼຸດຄ່າວິຊາ:** ອີກສິ່ງໜຶ່ງທີ່ສຳຄັນສຳລັບນັກທ່ອງທ່ຽວຈີນ ນອກຈາກດ້ານລາຄາ ແລະ ຄວາມປອດໄພແລ້ວ ກໍຄືຄວາມສະດວກສະບາຍໃນການອຳນວຍຄວາມສະດວກເຂົ້າ-ອອກປະເທດ. ກ່ອນທີ່ພວກເຂົາຈະຕັດສິນໃຈໄປທ່ອງທ່ຽວປະເທດໃດໜຶ່ງ ຖ້າຫາກປະເທດໃດມີນະໂຍບາຍໃນການເອົາວິຊາທີ່ສະດວກ, ວ່ອງໄວ ຫຼື ມີນະໂຍບາຍພິເສດທາງດ້ານວິຊາ ພວກເຂົາກໍຈະເລືອກທີ່ຈະເດີນທາງໄປປະເທດນັ້ນໆ.

ສຳລັບ ສປປ ລາວ, ໃນປີ 2023 ຄາດຄະເນຈຳນວນນັກທ່ອງທ່ຽວຈີນຈະເຂົ້າມາທ່ອງທ່ຽວຢູ່ ສປປ ລາວ ປະມານ 368.000 ເທື່ອຄົນ ຫຼື ເພີ່ມຂຶ້ນ 21% ຖ້າສົມທຽບໃສ່ກັບປີ 2022. ສິ່ງໜຶ່ງທີ່ເປັນໂອກາດໃຫ້ແກ່ ສປປ ລາວ ກໍຄືມີເສັ້ນທາງລົດໄຟເຊື່ອມໂຍງລະຫວ່າງລາວ-ຈີນ. ພາຍຫຼັງທີ່ 2 ລັດຖະບານໄດ້ອະນຸຍາດໃຫ້ເປີດບໍລິການລົດໄຟລະຫວ່າງປະເທດແລ້ວ ແນ່ນອນວ່າການບໍລິການເດີນທາງດ້ວຍລົດໄຟກໍຈະເປັນທາງເລືອກໜຶ່ງສຳລັບນັກທ່ອງທ່ຽວຈີນທີ່ຈະເດີນທາງເຂົ້າມາ ສປປ ລາວ. ນອກຈາກນັ້ນ, ໃນອະນາຄົດ ການບິນລາວກໍມີແຜນທີ່ຈະເປີດເສັ້ນທາງການບິນໄປຍັງເມືອງຕ່າງໆຂອງ ສປ ຈີນ ອີກ ເຊັ່ນ: ກວາງໂຈ່, ຊຽງໄຮ້, ເຊີນຕູ, ຊາງໂຈ່ ແລະ ຫາງໂຈ່.

## 4. ການກະກຽມການຕ້ອນຮັບນັກທ່ອງທ່ຽວຈີນຂອງພາກພື້ນ ແລະ ສາກົນ

ບັນດາປະເທດຕ່າງໆໃນໂລກ ໄດ້ມີການປັບປຸງ ແລະ ກຳນົດນະໂຍບາຍຕ່າງໆ ເພື່ອຟື້ນຟູ ແລະ ກະຕຸ້ນອຸດສະຫາກຳການທ່ອງທ່ຽວຂອງປະເທດຕົນໃຫ້ກັບຄືນມາຄຶກຄື້ນອີກຄັ້ງ ຊຶ່ງໜຶ່ງໃນນັ້ນກໍແມ່ນການກະກຽມໃນການຕ້ອນຮັບນັກທ່ອງທ່ຽວຈີນ ພາຍຫຼັງທີ່ລັດຖະບານຈີນໄດ້ມີນະໂຍບາຍຜ່ອນຜັນສາມາດໃຫ້ພົນລະເມືອງຈີນເດີນທາງອອກນອກປະເທດໄດ້.

**ປະເທດໄທ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດທີ່ຍັງມີການປະຕິບັດມາດຕະການປ້ອງກັນການລະບາດຂອງພະຍາດໂຄວິດ 19 (ຍັງມີຂໍ້ຈຳກັດໃນການເດີນທາງ) ຈະຕ້ອງມີປະກັນໄພສຸຂະພາບໃນວົງເງິນຕ່ຳສຸດ 10 ພັນໂດລາສະຫາລັດ. ໃນກໍລະນີມີການຕິດເຊື້ອ ແລະ ໄດ້ຮັບການປິ່ນປົວ ປະກັນໄພກໍຈະໄດ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ.
- ຫ້ອງການສາທາລະນະສຸກຂອງຈັງຫວັດຊຽງໃໝ່ ໄດ້ປະກາດຈະຈັດສັນວັກຊີນຈຳນວນ 3.000 ໂດສ/ວັນ ເພື່ອສັກເຂັມກະຕຸ້ນໃຫ້ແກ່ແຮງງານໃນອຸດສະຫາກຳການທ່ອງທ່ຽວ ຊຶ່ງຈະເລີ່ມປະຕິບັດແຕ່ວັນທີ 23 ມັງກອນ 2023.

<u>ການພັດທະນາການທ່ອງທ່ຽວ</u>

- ການຂາດແຄນແຮງງານໃນອຸດສະຫາກຳການທ່ອງທ່ຽວຍັງເປັນບັນຫາໜຶ່ງຕໍ່ການພັດທະນາການທ່ອງທ່ຽວຂອງປະເທດ ເຊັ່ນ: ໃນເມື່ອກ່ອນປະເທດໄທມີພະນັກງານນຳທ່ຽວພາສາຈີນປະມານ 5.000 ຄົນ ແຕ່ໃນປັດຈຸບັນ ມີພະນັກງານນຳທ່ຽວພາສາຈີນໜ້ອຍກວ່າ 25% ທີ່ຍັງເຮັດວຽກເປັນພະນັກງານນຳທ່ຽວຢູ່. ດັ່ງນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວ ລັດຖະບານໄທ ໄດ້ຈັດຝຶກອົບຮົມໃຫ້ແກ່ຜູ້ທີ່ມີຄວາມສົນໃຈຢາກເປັນພະ

ນັກງານນຳທ່ຽວຂຶ້ນ. ນອກຈາກນັ້ນ, ພາກທຸລະກິດຂອງຈັງຫວັດພູເກັດຍັງໄດ້ສະເໜີໃຫ້ລັດຖະບານອະນຸຍາດໃຫ້ຄົນປະເທດໃກ້ຄຽງສາມາດເຂົ້າມາເຮັດວຽກຢູ່ໃນພູເກັດໄດ້ ເພື່ອແກ້ໄຂການຂາດແຄນແຮງງານຢູ່ໃນອຸດສະຫາກຳການທ່ອງທ່ຽວ.

- ຫຼາຍສາຍການບິນຈະກັບຄືນມາໃຫ້ບໍລິການຄືນໃໝ່ ເຊັ່ນ: ສາຍການບິນ Spring Airlines ຈະກັບມາໃຫ້ບໍລິການຖ້ຽວບິນຈາກຊຽງໃໝ່-ພູເກັດ ແລະ ກວາງໂຈ-ຊຽງໃໝ່ ຊຶ່ງໄດ້ເລີ່ມບິນແຕ່ເດືອນ ມັງກອນ 2023. ນອກຈາກນັ້ນ ຍັງມີສາຍການບິນ Juneyao Airlines ທີ່ຈະກັບມາໃຫ້ບໍລິການຖ້ຽວບິນຈາກຊຽງໄຮ-ຊຽງໃໝ່ ຊຶ່ງຈະເລີ່ມໃຫ້ບໍລິການໃນວັນທີ 18 ມັງກອນ 2023.

<u>ການໂຄສະນາການທ່ອງທ່ຽວ</u>

- ການນຳຂັ້ນສູງ ໂດຍແມ່ນທ່ານລັດຖະມົນຕີກະຊວງທ່ອງທ່ຽວ ແລະ ກິລາ, ທ່ານລັດຖະມົນຕີກະຊວງຄົມມະນາຄົມ ແລະ ທ່ານລັດຖະມົນຕີກະຊວງສາທາລະນະສຸກ ໄດ້ເດີນທາງໄປຕ້ອນຮັບຖ້ຽວບິນຖ້ຽວທຳອິດທີ່ເດີນທາງມາຈາກປະເທດຈີນ ໂດຍການມອບຊໍ່ດອກໄມ້ ແລະ ປ້າຍຄຳຂວັນ ສະແດງຄວາມຍິນດີຕ້ອນຮັບເຂົ້າສູ່ປະເທດ.
- ອົງການທ່ອງທ່ຽວແຫ່ງປະເທດໄທໄດ້ວາງແຜນຈັດງານວາງສະແດງຢູ່ບັນດາເມືອງສຳຄັນຕ່າງໆຂອງຈີນ ເຊັ່ນ: ຊຽງໄຮ້, ກວາງໂຈ່ ແລະ ເສິນຕູ່ ໃນເດືອນກຸມພາ 2023.

**ປະເທດກຳປູເຈຍ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ມາດຕະການເຂົ້າ-ອອກປະເທດ ປະຕິບັດຄືກັນກັບກ່ອນມີການລະບາດຂອງພະຍາດໂຄວິດ 19
- ບໍ່ຈຳເປັນຕ້ອງມີການກວດຫາເຊື້ອພະຍາດໂຄວິດ 19
- ບໍ່ຈຳເປັນຕ້ອງມີປະກັນໄພສຸຂະພາບ (ປະກັນໂຄວິດ 19)

<u>ການພັດທະນາການທ່ອງທ່ຽວ</u>

- ສາຍການບິນຈະເລີ່ມກັບມາໃຫ້ບໍລິການຄືນໃໝ່ລະຫວ່າງ ໜານໜິງ - ພະນົມເປັນ.

<u>ການໂຄສະນາການທ່ອງທ່ຽວ</u>

- ໃນປີ 2023 ນີ້ ກຳປູເຈຍຈະໄດ້ຈັດກິດຈະກຳປີທ່ອງທ່ຽວກຳປູເຈຍ (Visit Cambodia 2023). ນອກຈາກນັ້ນ ຍັງເປັນການສະເຫຼີມສະຫຼອງສາຍພົວພັນກຳປູເຈຍ-ຈີນ ຄົບຮອບ 65 ປີ (Samean, 2023).
- ກະຊວງທ່ອງທ່ຽວກຳປູເຈຍ ໄປຈັດງານໂຄສະນາການທ່ອງທ່ຽວຢູ່ຕົວເມືອງໃຫຍ່ຕ່າງໆ ໃນປະເທດຈີນ ເພື່ອໂຄສະນາໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍ.

**ປະເທດຫວຽດນາມ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ບໍ່ຈຳເປັນຕ້ອງກວດຫາເຊື້ອພະຍາດ (Vietnam Airlines, 2023)

<u>ການພັດທະນາການທ່ອງທ່ຽວ</u>

- ໃນປີ 2019, ມີນັກທ່ອງທ່ຽວຈີນ ປະມານ 30-38% ທີ່ເດີນທາງເຂົ້າໄປທ່ອງທ່ຽວປະເທດຫວຽດນາມ;
- ສາຍການບິນ VietJet Air and China Southern airlines ຈະກັບຄືນມາໃຫ້ບໍລິການເລີ່ມແຕ່ວັນທີ 26 ມີນາ 2023;
- ສາຍການບິນ Vietnam Airlines ຈະກັບຄືນມາໃຫ້ບໍລິການເສັ້ນທາງການບິນລະຫວ່າງຫວຽດນາມ ແລະ ຈີນ ເລີ່ມແຕ່ວັນທີ 1 ມິຖຸນາ 2023 (Vietnam ready, 2023)

**ປະເທດເກົາຫຼີ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ກ່ອນທີ່ຈະເດີນທາງເຂົ້າປະເທດເກົາຫຼີ ຕ້ອງໄດ້ກວດຫາເຊື້ອພະຍາດໂຄວິດ 19 ດ້ວຍລະບົບ PCR 2 ວັນກ່ອນເດີນທາງ ຫຼື ຖ້າກວດດ້ວຍລະບົບ ATK ແມ່ນ 1 ວັນກ່ອນມື້ອອກເດີນທາງ;
- ນັກທ່ອງທ່ຽວທີ່ມີຈຸດປະສົງໃຊ້ເວລາຢູ່ເກົາຫຼີໜ້ອຍກວ່າ 2 ເດືອນແມ່ນສາມາດກວດຫາເຊື້ອພະຍາດດ້ວຍລະບົບ PCR ຢູ່ສະໜາມບິນ ແລະ ລໍຖ້າເອົາຜົນກວດ. ສຳລັບຄົນເກົາຫຼີ ແລະ ນັກທ່ອງທ່ຽວທີ່ມາຢູ່ຫຼາຍກວ່າ 2 ເດືອນ ແມ່ນສາມາດໄປກວດຫາເຊື້ອພະຍາດຢູ່ຕາມໂຮງໝໍຕ່າງໆ ແລະ ສາມາດໄປກັກຕົວຢູ່ເຮືອນໄດ້ ເພື່ອລໍຖ້າຜົນກວດ.
- ອະນຸຍາດສະເພາະສາຍການບິນທີ່ເດີນທາງມາຈາກ ຈີນແຜ່ນດິນໃຫຍ່ (mainland China) ທີ່ສາມາດລົງຈອດສະໜາມບິນອິນຊອນ.

**ປະເທດຍີ່ປຸ່ນ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ຜູ້ທີ່ເດີນທາງມາຈາກຈີນແຜ່ນດິນໃຫຍ່ ຈະຕ້ອງໄດ້ກວດຫາເຊື້ອພະຍາດໂຄວິດ 72 ຊົ່ວໂມງກ່ອນອອກເດີນທາງ;
- ຜູ້ທີ່ເດີນທາງມາຈາກຈີນແຜ່ນດິນໃຫຍ່ ຫຼື ເຄີຍໄປຢູ່ປະເທດຈີນ 7 ວັນກ່ອນມື້ທີ່ຈະອອກເດີນທາງຈະຕ້ອງໄດ້ກວດຫາເຊື້ອພະຍາດດ້ວຍລົບ PCR ຫຼື ATK ເວລາເດີນທາງມາຮອດສະໜາມບິນປະເທດຍີ່ປຸ່ນ;

- ສາຍການບິນທີ່ເດີນທາງມາຈາກປະເທດຈີນອະນຸຍາດໃຫ້ລົງຈອດສະເພາະສະໜາມບິນນາລິຕະ, ຮາເນດະ ຄານໄຊ ແລະ ຊູບຸ.
- ນັກທ່ອງທ່ຽວຜູ້ໃດຫາກກວດພົບເຊື້ອພະຍາດ ຈະຕ້ອງໄດ້ກັກຕົວ 7 ວັນ.

**ປະເທດສິງກະໂປ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ປະຕິບັດຕາມລະບຽບການເຂົ້າ-ອອກປະເທດແບບປົກກະຕິ ຄືກັນກັບກ່ອນການລະບາດຂອງພະຍາດ, ຖ້າມີກໍລະນີຈໍາເປັນ ກໍອາດຈະມີການປ່ຽນແປງໄດ້ໃນອະນາຄົດ.

**ປະເທດມາເລເຊຍ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ທຸກຄົນທີ່ເດີນທາງເຂົ້າປະເທດມາເລເຊຍຈະໄດ້ວັດແທກອຸນຫະພູມ, ຖ້າຫາກຜູ້ໃດມີອຸນຫະພູມສູງ (ມີໄຂ້) ຈະໄດ້ກວດຫາເຊື້ອພະຍາດໂຄວິດ;
- ຂີ້ເຫຍື້ອ ຫຼື ເຄື່ອງດື່ມຕ່າງໆທີ່ໃຫ້ບໍລິການຢູ່ພາຍໃນເຄື່ອງບິນທີ່ເດີນທາງມາຈາກປະເທດຈີນ ຈະໄດ້ຫາເຊື້ອພະຍາດ.

**ປະເທດອິນເດຍ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ຜູ້ທີ່ເດີນທາງມາຈາກປະເທດຈີນ, ຮົງກົງ, ຍີ່ປຸ່ນ, ເກົາຫຼີ, ສິງກະໂປ ແລະ ປະເທດໄທ ຈະຕ້ອງມີໃບຢັ້ງຢືນຜົນກວດພະຍາດເປັນລົບ ກ່ອນທີ່ຈະເຂົ້າປະເທດອິນເດຍ;
- ຖ້າຫາກກວດພົບເຊື້ອ ຫຼື ມີອາການໄຂ້ ແມ່ນຈະຕ້ອງໄດ້ກັກຕົວ (ຈໍາກັດບໍລະເວນ);
- ສຸ່ມກວດນັກທ່ອງທ່ຽວປະມານ 2% ທີ່ເດີນທາງເຂົ້າປະເທດ.

**ປະເທດອື່ນໆ**

<u>ນະໂຍບາຍທາງດ້ານສຸຂະພາບ</u>

- ປະເທດອິຕະລີ: ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນ ແມ່ນຈະໄດ້ກວດຫາເຊື້ອພະຍາດໂຄວິດ 19 ດ້ວຍລະບົບ ATK;
- ປະເທດສະເປນ: ມີໃບຢັ້ງຢືນຜົນກວດພະຍາດເປັນລົບ ຫຼື ໃບຢັ້ງຢືນການສັກຢາປ້ອງກັນພະຍາດໂຄວິດ 19;
- ປະເທດຝຣັ່ງ: ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນ ຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດໂຄວິດ 19 ເປັນລົບ ດ້ວຍລະບົບ PCR 48 ຊົ່ວໂມງກ່ອນການເດີນທາງ (ເລີ່ມປະຕິບັດວັນທີ 5 ມັງກອນ);

- ປະເທດສະວີເດັນ: ທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນ ຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດໂຄວິດ 19 ເປັນລົບ;
- ປະເທດເບວຢຽມ: ທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນ ຕ້ອງໄດ້ກວດຫາເຊື້ອພະຍາດໂຄວິດ 19;
- ປະເທດອັງກິດ: ທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດໂຄວິດ 19 ເປັນລົບ;
- ປະເທດອົດສຕຼາລີ: ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນ ຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດໂຄວິດ 19 ເປັນລົບ ດ້ວຍລະບົບ PCR 48 ຊົ່ວໂມງກ່ອນການເດີນທາງ;
- ປະເທດການາດາ: ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນ ຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດໂຄວິດ 19 ເປັນລົບ ດ້ວຍລະບົບ PCR 48 ຊົ່ວໂມງກ່ອນການເດີນທາງ;
- ປະເທດກາຕາ: ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນ ຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດໂຄວິດ 19 ເປັນລົບ ດ້ວຍລະບົບ PCR 48 ຊົ່ວໂມງກ່ອນການເດີນທາງ;
- ປະເທດໂມຣັອກໂກ: ບໍ່ອະນຸຍາດໃຫ້ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນເຂົ້າປະເທດ.

**ມາດຕະການຜ່ອນຜັນຂອງແຕ່ລະປະເທດໃນການຕ້ອນຮັບນັກທ່ອງທ່ຽວ**

**(ເລີ່ມຈາກມາດຕະການຜ່ອນຜັນຫຼາຍສຸດ ຫາ ໜ້ອຍສຸດ)**

| ລ/ດ | ອາຊຽນ | ອິນເດຍ | ສະຫາພາບເອີຣົບ, ການາດາ ແລະ ອົດສະຕາລີ | ຍີ່ປຸ່ນ ແລະ ເກົາຫຼີ | ໂມລ໋ອກໂກ |
|---|---|---|---|---|---|
| ນະໂຍບາຍຂອງລັດຖະບານ | ປະເທດມາເລເຊຍ ແລະ ປະເທດໄທຈະໄດ້ກວດຫາເຊື້ອພະຍາດຈາກເສດເຄື່ອງດື່ມ, ອາຫານຂອງສາຍການບິນທີ່ເດີນທາງມາຈາກປະເທດຈີນ. ນອກ ຈາກນັ້ນ, ທຸກຄົນທີ່ເດີນທາງເຂົ້າປະ ເທດມາເລເຊຍຈະໄດ້ວັດແທກອຸນຫະພູມ, ຖ້າຫາກຜູ້ໃດມີອຸນຫະພູມສູງ (ມີໄຂ້) ຈະໄດ້ກວດຫາເຊື້ອພະຍາດໂຄວິດ. ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດທີ່ຍັງມີການປະຕິບັດມາດຕະການປ້ອງກັນການລະບາດຂອງພະຍາດໂຄວິດ 19 (ຍັງມີຂໍ້ຈຳ | ຜູ້ທີ່ເດີນທາງມາຈາກປະເທດຈີນ, ຮົງກົງ, ຍີ່ປຸ່ນ, ເກົາຫຼີ, ສິງກະໂປ ແລະ ປະເທດໄທຈະໄດ້ມີໃບ ຢັ້ງຢືນຜົນກວດພະຍາດເປັນລົບ ກ່ອນທີ່ຈະເຂົ້າປະເທດອິນເດຍ. ຖ້າຫາກກວດພົບເຊື້ອ ຫຼື ມີອາການໄຂ້ ແມ່ນຈະຕ້ອງໄດ້ກັກຕົວ (ຈຳກັດບໍລະເວນ). ສຸ່ມກວດນັກທ່ອງທ່ຽວປະມານ 2 % ທີ່ເດີນທາງເຂົ້າປະເທດ. | (ປະເທດຝຣັ່ງ, ສະວີເດັນ, ເບວຢ້ຽມ, ເຢຍລະມັນ, ອັງກິດ, ການາດາ ແລະ ອົດສະຕາລີ) ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດໂຄວິດ 19 ເປັນລົບດ້ວຍລະບົບ PCR 48 ຊົ່ວໂມງກ່ອນການເດີນທາງ<br>**ປະເທດສະເປນ:** ຕ້ອງມີໃບຢັ້ງຢືນການສັກຢາປ້ອງກັນພະຍາດໂຄວິດ 19<br>**ປະເທດອີຕາລີ:** ສີດຢາຂ້າເຊື້ອກະເປົາຜູ້ໂດຍສານ | ຜູ້ທີ່ເດີນທາງມາຈາກປະເທດຈີນ (mainland China) ຈະຕ້ອງໄດ້ກວດຫາເຊື້ອພະຍາດໂຄວິດ 72 ຊົ່ວໂມງກ່ອນອອກເດີນທາງ ຜູ້ທີ່ເດີນທາງມາຈາກປະເທດຈີນ (mainland China) ຫຼື ເຄີຍໄປຢູ່ປະເທດຈີນ 7 ວັນກ່ອນມື້ທີ່ຈະອອກເດີນທາງຈະຕ້ອງໄດ້ກວດຫາເຊື້ອພະຍາດດ້ວຍລົບ PCR ຫຼື ATK | ບໍ່ອະນຸຍາດໃຫ້ນັກທ່ອງທ່ຽວທຸກສັນຊາດທີ່ເດີນທາງມາຈາກປະເທດຈີນເຂົ້າປະເທດ. |

| | | | | | |
|---|---|---|---|---|---|
| | ກັດໃນການເດີນທາງ) ແມ່ນຈະຕ້ອງມີປະກັນໄພສຸຂະພາບໃນວົງເງິນຕໍ່າສຸດ 10 ພັນໂດລາສະຫາລັດ. | | **ສະຫາລັດອາເມລິກາ:** ສະຫາລັດເອເມລິກາ: ນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນ, ຮົງກົງ ແລະ ມາເກົາຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດໂຄວິດ 19 ເປັນລົບດ້ວຍລະ ບົບ **PCR** 48 ຊົ່ວໂມງກ່ອນການເດີນທາງ | ເວລາເດີນທາງມາຮອດສະໜາມບິນປະເທດຍີ່ປຸ່ນ. ນັກທ່ອງທ່ຽວຜູ້ໃດຫາກກວດພົບເຊື້ອພະຍາດຈະຕ້ອງໄດ້ກັກຕົວ 7 ວັນ | |

## 5 ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຂອງ ສປປ ລາວ

### 5.1 ຂໍ້ສະດວກ

ນັບຕັ້ງແຕ່ວັນທີ 9 ພຶດສະພາ 2022 ເປັນຕົ້ນມາ ສປປ ລາວ ໄດ້ເປີດປະເທດຕ້ອນຮັບນັກທ່ອງທ່ຽວຢ່າງເຕັມຮູບແບບ ເຮັດໃຫ້ມີຜູ້ເດີນທາງເຂົ້າມາ ສປປ ລາວ ເພີ່ມຂຶ້ນ, ປະຊາຊົນລາວສ່ວນຫຼາຍໄດ້ຮັບການສັກຢາວັກຊີນປ້ອງກັນໂຄວິດ 19 ຄົບໂດສ, ຂະແໜງການກ່ຽວຂ້ອງຕ່າງໆທັງພາກລັດ ແລະ ພາກທຸລະກິດ ໄດ້ຮ່ວມມືກັນເອົາໃຈໃສ່ປັບປຸງຄຸນນະພາບການທ່ອງທ່ຽວ ແລະ ການບໍລິການໃຫ້ມີບາດກ້າວດີຂຶ້ນສາມາດຮອງຮັບນັກທ່ອງທ່ຽວໄດ້ເຮັດໃຫ້ບັນຍາກາດການທ່ອງທ່ຽວຢູ່ບັນດາແຂວງມີຄວາມຄຶກຄື້ນອີກຄັ້ງ ແລະ ລາຍຮັບຈາກການທ່ອງທ່ຽວເພີ່ມສູງຂຶ້ນ:

- ເປີດດ່ານສາກົນເຂົ້າ-ອອກທຸກດ່ານ ແລະ ມີບຸກຄະລາກອນພ້ອມທີ່ຈະອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ພ້ອມທັງອຳນວຍຄວາມສະດວກດ້ານການອອກວີຊາໃຫ້ແກ່ນັກທ່ອງທ່ຽວ;
- ຍົກເລີກມາດຕະການກວດຫາເຊື້ອພະຍາດໂຄວິດ-19 (ບໍ່ກວດ ATK, ບໍ່ກວດບັດສັກຢາ), ມີແຕ່ຈະສຸ່ມກວດຫາເຊື້ອໃນກໍລະນີທີ່ມີຄວາມສ່ຽງ ແລະ ມີອາການ;
- ບັນດາສາຍການບິນຕ່າງໆໄດ້ເລີ່ມກັບມາໃຫ້ບໍລິການຄືນໃໝ່ ແລະ ມີແຜນຈະເພີ່ມຖ້ຽວບິນລະຫວ່າງປະເທດລາວ - ຈີນ ເພື່ອຮອງຮັບນັກທ່ອງທ່ຽວທີ່ຈະເດີນທາງມາທ່ຽວ ສປປ ລາວ;
- ມີເສັ້ນທາງລົດໄຟເຊື່ອມໂຍງລະຫວ່າງລາວ-ຈີນ ຊຶ່ງພາຍຫຼັງທີ່ 2 ລັດຖະບານອະນຸຍາດໃຫ້ເປີດບໍລິການລົດໄຟລະຫວ່າງປະເທດແລ້ວ ແນ່ນອນວ່າການບໍລິການເດີນທາງດ້ວຍລົດໄຟກໍຈະເປັນທາງເລືອກໜຶ່ງສຳລັບນັກທ່ອງທ່ຽວຈີນທີ່ຈະເດີນທາງເຂົ້າມາ ສປປ ລາວ. ນອກຈາກນັ້ນ, ໃນອະນາຄົດການບິນລາວກໍມີແຜນທີ່ຈະເປີດເສັ້ນທາງການບິນໄປຍັງເມືອງຕ່າງໆຂອງ ສປ ຈີນ ອີກ ເຊັ່ນ: ກວາງໂຈ, ຊຽງໄຮ, ເຊີນຕູ໋, ຊາງໂຈ່ ແລະ ຫາງໂຈ;
- ບັນດາໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ ຫຼາຍແຫ່ງໄດ້ຜ່ານກວດຝຶກອົບຮົມ ແລະ ໄດ້ຮັບໃບຢັ້ງຢືນມາດຕະຖານຄວາມສະອາດ ແລະ ປອດໄພ (Lao Safe).

### 5.2 ຂໍ້ຫຍຸ້ງຍາກ

ຫຼັງຈາກທີ່ພວກເຮົາໄດ້ເປີດປະເທດຕ້ອນຮັບຜູ້ເດີນທາງຢ່າງເຕັມຮູບແບບ,ບັນດາຫົວໜ່ວຍທຸລະກິດບໍລິການທ່ອງທ່ຽວ ແລະ ຂະແໜງການປົ່ນອ້ອມ ໄດ້ຄ່ອຍຫັນມາໃຫ້ບໍລິການຕ້ອນຮັບນັກທ່ອງທ່ຽວອີກຄັ້ງ ແຕ່ຍັງມີຫຼາຍບັນຫາທີ່ຍັງເປັນສິ່ງທ້າທາຍໃນການຕ້ອນຮັບຜູ້ທີ່ຈະເດີນທາງເຂົ້າມາ ຊຶ່ງບັນຫາຕົ້ນຕໍທີ່ພາກສ່ວນກ່ຽວຂ້ອງສະເໜີສາມາດສະຫຼຸບໂດຍຫຍໍ້ດັ່ງນີ້:

➢ **ດ້ານຄົມມະນາຄົມ:**

- ບັນຫາດ້ານການຈຳໜ່າຍ ປີ້ລົດໄຟ ລາວ-ຈີນ ແມ່ນເຫັນວ່າມີຄວາມຫຍຸ້ງຍາກ ໃຫ້ແກ່ນັກທ່ອງທ່ຽວຫຼາຍໃນການຊື້ປີ້ລົດໄຟຄວນສ້າງຕົວແທນໃນການຈຳໜ່າຍປີ້ລົດໄຟລາວ-ຈີນ ຫຼື ມີການຂາຍແບບທັນສະໄໝ ແລະ ຫຼາຍຊ່ອງທາງ;

- ສະພາບເສັ້ນທາງຫຼວງ ແລະ ເສັ້ນທາງເຂົ້າຫາສະຖານທີ່ທ່ອງທ່ຽວຫຼາຍແຫ່ງເປເພ, ເປັນບວກເປັນຂຸມນ້ອຍໃຫຍ່ເຮັດໃຫ້ການເດີນທາງສັນຈອນໄປມາພົບຄວາມຫຍຸ້ງຍາກ ແລະ ໃຊ້ເວລາເດີນທາງຫຼາຍຊົ່ວໂມງ. ນອກຈາກນັ້ນ, ການສັນຈອນເທິງທ້ອງຖະໜົນໃນຕົວເມືອງ ບໍ່ມີຄວາມເປັນລະບຽບຮຽບຮ້ອຍເຮັດໃຫ້ການສັນຈອນມີຄວາມແອອັດ ໂດຍສະເພາະແມ່ນຢູ່ບັນດາເມືອງທ່ອງທ່ຽວສຳຄັນ ເຊັ່ນ: ການຈອດລົດບໍ່ເປັນລະບຽບ;
- ການເດີນທາງຈາກວຽງຈັນ-ຄຸນໝິງ ຄາດວ່າຈະໃຊ້ເວລາທັງໝົດ 12 ຊົ່ວໂມງ, ໃນນັ້ນໃຊ້ເວລາໃນການຜ່ານດ່ານຢູ່ ສປປ ລາວ 2 ຊົ່ວໂມງ ແລະ ສປ ຈີນ 2 ລວມເປັນ 4 ຊົ່ວໂມງ, ຊຶ່ງບັນຫາດັ່ງກ່າວຈະເຮັດໃຫ້ນັກທ່ອງທ່ຽວຂາດຄວາມປະທັບໃຈ, ຈຶ່ງສະເໜີໃຫ້ທາງພາກລັດຊ່ວຍແກ້ໄຂບັນຫາດັ່ງກ່າວ ເພື່ອຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ;
- ການຈັດສັນບ່ອນຈອດລົດຢູ່ໃນຕົວເມືອງທ່ອງທ່ຽວ, ສະຖານີຂົນສົ່ງໂດຍສານ ຍັງບໍ່ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີການເກັບຄ່າໃຊ້ຈ່າຍເພີ່ມ.

➢ **ດ້ານບຸກຄະລາກອນ**

- ແຮງງານທີ່ປະກອບໃນຂະແໜງທ່ອງທ່ຽວຍັງບໍ່ພຽງພໍ ແລະ ແຮງງານທີ່ມີຄຸນນະພາບມີຈຳນວນຈຳກັດເປັນຕົ້ນແມ່ນພະນັກງານເຮັດວຽກຢູ່ຕາມໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ອື່ນໆ;
- ຍັງຂາດພະນັກງານນຳທ່ຽວສະເພາະດ້ານ (ພາສາຈີນ) ຊຶ່ງໃນປັດຈຸບັນຍັງບໍ່ພຽງກັບກັບຄວາມຕ້ອງການຂອງບໍລິສັດທ່ອງທ່ຽວໄດ້.

➢ **ສິ່ງອຳນວຍຄວາມສະດວກ ແລະ ຜະລິດຕະພັນການທ່ອງທ່ຽວ**

- ສະຖານທີ່ພັກ ແລະ ຮ້ານອາຫານທີ່ໄດ້ຮັບຄຸນນະພາບຍັງບໍ່ທັນມີຫຼາຍ ຊຶ່ງທຸລະກິດສ່ວນໃຫຍ່ຍັງເປັນການບໍລິການແບບຄອບຄົວ ໂດຍສະເພາະແມ່ນຢູ່ບັນດາແຂວງຕ່າງໆ;
- ສະຖານທີ່ທ່ອງທ່ຽວຫຼາຍໆແຫ່ງ ຍັງບໍ່ໄດ້ຮັບການຈັດສັນ ແລະ ພັດທະນາຢ່າງເປັນຮູບປະທຳ; ພ້ອມດຽວກັນນັ້ນແຫຼ່ງທ່ອງທ່ຽວຫຼາຍແຫ່ງຍັງບໍ່ທັນມີມາດຕະການໃນການຮອງຮັບໃນກໍລະນີທີ່ມີນັກທ່ອງທ່ຽວເຂົ້າມາທ່ຽວຊົມເປັນຈຳນວນຫຼວງຫຼາຍ;
- ບໍລິສັດທ່ອງທ່ຽວ ທີ່ບໍລິການນັກທ່ອງທ່ຽວລາວ-ຈີນ ແມ່ນໄດ້ສ້າງຜົນກະທົບ ແລະ ບັນຫາບາງດ້ານໃຫ້ແຫຼ່ງທ່ອງທ່ຽວ ໂດຍບໍ່ໄດ້ຄຳນຶງເຖິງສິ່ງແວດລ້ອມ, ຄວາມຍືນຍົງ ແລະ ວັດທະນະທຳອັນດີງາມ ເຊິ່ງອາດຈະເຮັດໃຫ້ມີການທຶດຖອຍ ແລະ ເຊື່ອມໂຊມລົງ;
- ຜະລິດຕະພັນການທ່ອງທ່ຽວການທ່ອງທ່ຽວຍັງບໍ່ທັນຫຼາກຫຼາຍ, ບໍ່ສາມາດດຶງດູດນັກທ່ອງທ່ຽວໄດ້ ແລະ ນອກຈາກນັ້ນ, ເຄື່ອງສິນຄ້າທີ່ລະນຶກທີ່ເປັນຂອງລາວແທ້ໆ ກໍຍັງບໍ່ໜ້ອຍ;
- ສິ່ງພິມໂຄສະນາການທ່ອງທ່ຽວທີ່ເປັນພາສາຈີນຍັງບໍ່ທັນມີ ຊຶ່ງເປັນບັນຫາໜຶ່ງທີ່ຈຳເປັນທີ່ຈະຕ້ອງໄດ້ຮີບຮ້ອນໄກ້ໄຂ ເພື່ອສາມາດໂຄສະນາໃຫ້ແກ່ນັກທ່ອງທ່ຽວຜ່ານທາງລະບົບເອເລັກໂຕນິກທີ່ສາມາດເຂົ້າເຖິງກຸ່ມນັກທ່ອງທ່ຽວຈີນໄດ້ງ່າຍຂຶ້ນ.

## 6. ແຜນກິດຈະກຳການຕ້ອນຮັບນັກທ່ອງທ່ຽວຈີນ ສຳລັບປີ 2023 (ໄລຍະສັ້ນ)

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| 1 | ຈັດພິທີເປີດເຊື່ອມເສັ້ນທາງລົດໄຟ ລາວ-ຈີນ ຢູ່ດ່ານສາກົນບໍ່ເຕນ, ແຂວງຫຼວງນໍ້າທາ | ແຕ່ງຕັ້ງຄະນະຮັບຜິດຊອບ, ກຳນົດແຜນວຽກ, ແຜນຄົນ ແລະ ແຜນງົບປະມານໃຫ້ລະອຽດ, ຕິດຕາມ ແລະ ລາຍງານການກະກຽມໃຫ້ການນຳເພື່ອຂໍທິດຊີ້ນຳຢ່າງເປັນປົກກະຕິ | 13 ເມສາ 2023 | | ລັດຖະບານ | ກົມແຜນການ ແລະ ການຮ່ວມມືສາກົນ, ຫ້ອງການກະຊວງ ຖວທ ສົມທົບກັບກະຊວງການຕ່າງປະເທດ ແລະ ກະຊວງ ຍທຂ |
| 2 | ປັບປຸງການບໍລິການ ເຂົ້າ-ອອກ ແລະ ສິ່ງອຳນວຍຄວາມສະດວກຢູ່ຕາມດ່ານສາກົນ | - ປັບປຸງປ່ອງບໍລິການຢູ່ດ່ານໃຫ້ມີຄວາມໂລ່ງລ່ຽນ, ເປັນລະບຽບ ແລະ ວ່ອງໄວ<br>- ສະໜອງອຸປະກອນທີ່ທັນສະໃໝເພື່ອຮັບໃຊ້ການກວດຄົນເຂົ້າ-ອອກໃຫ້ພຽງພໍ | 2023 | ການບໍລິການເຂົ້າ-ອອກຢູ່ດ່ານສາກົນມີຄວາມວ່ອງໄວ, ເປັນລະບຽບ ແລະ ນັກທ່ອງທ່ຽວມີຄວາມເພິ່ງພໍໃຈ | ລັດຖະບານ | - ກະຊວງ ປກສ<br>- ກະຊວງການຕ່າງປະເທດ<br>- ກະຊວງການເງິນ<br>- ກະຊວງ ຖວທ |
| 3 | ແກ້ໄຂບັນຫາການຈຳໜ່າຍປີ້ລົດໄຟໃຫ້ມີຄວາມສະດວກ ແລະ ວ່ອງໄວ | ປຶກສາຫາລືກັບບໍລິສັດລົດໄຟລາວ-ຈີນ ແລະ ພາກສ່ວນທີ່ກ່ຽວຂ້ອງໂດຍການມີສ່ວນຮ່ວມລະຫວ່າງພາກ | 2023 | ທາງສຽງຈົ່ມວ່າຈາກສັງຄົມກ່ຽວກັບບັນຫາການຊື້ປີ້ລົດໄຟຈະຫຼຸດລົງ ແລະ | | ກະຊວງ ຍທຂ<br>ບໍລິສັດທາງລົດໄຟ ລາວ-ຈີນ<br>ກະຊວງ ຖວທ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | ລັດ ແລະ ພາກທຸລະກິດໂດຍສະເພາະແມ່ນອຸດສະຫາກຳການທ່ອງທ່ຽວ | | ຜູ້ໂດຍສານຈະມີຄວາມປະທັບໃຈຫຼາຍຂຶ້ນ | | |
| 4 | ສ້າງວິດີໂອໂຄສະນາການທ່ອງທ່ຽວເປັນພາສາຈີນ ຄວາມຍາວ 3 ນາທີ | ສຸມໃສ່ໂຄສະນາຜະລິດຕະພັນການທ່ອງທ່ຽວທີ່ໂດດເດັ່ນ ເປັນຕົ້ນແມ່ນສະຖານທີ່ທ່ອງທ່ຽວ, ອາຫານແລະວັດທະນະທຳອັນດີງາມຂອງລາວໂດຍການໂຄສະນາຜ່ານຊ່ອງທາງສື່ອອນລາຍທີ່ນັກທ່ອງທ່ຽວຈີນນິຍົມໃຊ້ ເຊັ່ນ: WeChat, Tiktok, | 2023-2025 | ການໂຄສະນາການທ່ອງທ່ຽວລາວສາມາດເຂົ້າເຖິງກຸ່ມຕະຫຼາດນັກທ່ອງທ່ຽວຈີນໄດ້ຫຼາຍຂຶ້ນ ແລະ ນັກທ່ອງທ່ຽວຈີນຈະໄດ້ຮັບຮູ້ຂໍ້ມູນການທ່ອງທ່ຽວຂອງລາວ ສາມາດສ້າງຄວາມດຶງດູດໃຈໃນການເດີນທາງຫຼາຍຂຶ້ນ | ລັດຖະບານ<br>ພາກທຸລະກິດ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ<br>ພາກທຸລະກິດ |
| 5 | ຝຶກອົບຮົມພະນັກງານນຳທ່ຽວພາສາຈີນໄລຍະສັ້ນເພື່ອອອກແບບນຳທ່ຽວຊົ່ວຄາວ | - ປັບປຸງຫຼັກສູດຝຶກອົບຮົມພະນັກງານນຳທ່ຽວໄລຍະສັ້ນ 20 ວັນ<br>- ຊຸກຍູ້ຜູ້ທີ່ໄດ້ພາສາຈີນເຂົ້າຮ່ວມຝຶກອົບຮົມພະນັກງານນຳທ່ຽວໄລຍະສັ້ນ | 2023 | - ມີຫຼັກຫຼັກສູດຝຶກອົບຮົມພະນັກງານນຳທ່ຽວໄລຍະສັ້ນ<br>- ຈຳນວນພະນັກງານນຳທ່ຽວພາສາຈີນ ແລະ ພະນັກງານ | ລັດຖະບານ<br>ການຊ່ວຍເຫຼືອຈາກຕ່າງປະເທດ | ສະຖາບັນສົ່ງເສີມວິຊາຊີບ, ວັດທະນະທຳ ແລະ ທ່ອງທ່ຽວ<br>ສະຖານບັນການສຶກສາ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | | ໃຫ້ບໍລິການທີ່ສາມາດເວົ້າພາສາຈີນໄດ້ມີຈຳນວນເພີ່ມຫຼາຍຂຶ້ນ | | |
| 6 | ຕິດຕັ້ງປ້າຍຊີ້ບອກສະຖານທີ່ທ່ອງທ່ຽວຕາມເສັ້ນທາງຫຼວງແຫ່ງຊາດ ແລະ ເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວບູລິມະສິດຕາມເສັ້ນທາງລົດໄຟ ລາວ - ຈີນ (ພາສາລາວ, ອັງກິດ, ພາສາຈີນ) | ຈຸດທີ່ຕັ້ງແມ່ນອີງຕາມບົດລາຍງານການລົງສຳຫຼວດເກັບກຳຂໍ້ມູນສິ່ງອຳນວຍຄວາມສະດວກຕາມເສັ້ນທາງລົດໄຟ ລາວ-ຈີນ | ສຳເລັດກ່ອນເດືອນ ມິຖຸນາ ປີ 2023 | ນັກທ່ອງທ່ຽວທີ່ຂັບຂີ່ລົດດ້ວຍຕົນເອງຮັບຮູ້ຂໍ້ມູນເສັ້ນທາງເຂົ້າເຖິງສະຖານທີ່ທ່ອງທ່ຽວບູລິມະສິດ | ADB | ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ |
| 7 | ພິມແຜ່ນພັບ, ປິດສະເຕີ ແລະ ໂຄສະນາຜ່ານທາງອີເລັກໂຫຼນິກກ່ຽວກັບ Do and Don’t ເປັນພາສາຈີນ | ຈັດພິມ ແລະ ໂຄສະນາຜ່ານສື່ສັງຄົມອອນລາຍ ຫຼື ທາງອີເລັກໂຫຼນິກ | 2023 | ນັກທ່ອງທ່ຽວຮັບຮູ້ຂໍ້ມູນກ່ຽວກັບສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດ | ລັດຖະບານ | ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ |
| 8 | ການເຂົ້າຮ່ວມງານວາງສະແດງທ່ອງທ່ຽວຢູ່ ສປ ຈີນ | ສົມທົບກັບບັນດາຫົວໜ່ວຍທຸລະກິດລາວເຂົ້າຮ່ວມງານວາງສະແດງດັ່ງກ່າວ ເພື່ອໂຄສະນາການທ່ອງ | ປີ 2023 | ນັກທ່ອງທ່ຽວຈີນຈະໄດ້ຮັບຮູ້ຂໍ້ມູນຂ່າວສານການທ່ອງທ່ຽວ, ສະຖານທີ່ທ່ອງທ່ຽວ | ລັດຖະບານ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ ພາກທຸລະກິດ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | ທ່ຽວລາວໃຫ້ນັກທ່ອງທ່ຽວຈີນເຂົ້າມາທ່ຽວ ສປ ລາວຫຼາຍຂຶ້ນ. ຫົວໜ່ວຍທຸລະກິດຂອງລາວ ຈະໄດ້ພົບປະຫົວໜ່ວຍທຸລະກິດຈີນ ແລະ ບັນດາປະເທດອື່ນ ເພື່ອເຮັດສັນຍາ ຮັບ-ສົ່ງນັກທ່ອງທ່ຽວ. | | ແລະ ຜະລິດຕະພັນການທ່ອງທ່ຽວໃໝ່ໆຂອງລາວ ແລະ ເຂົ້າມາທ່ຽວລາວຫຼາຍຂຶ້ນ, ບັນດາບໍລິສັດທ່ອງທ່ຽວຂອງລາວຈະມີຄູ່ສັນຍາຮັບ-ສົ່ງນັກທ່ອງທ່ຽວ | | |
| 9 | ການຈັດລາຍການລົງຢ້ຽມຢາມແຫຼ່ງທ່ອງທ່ຽວ FAMTRIP ສຳລັບນັກທຸລະກິດຈີນ ເພື່ອຊ່ວຍໂຄສະນາ ແລະ ເຮັດສັນຍາຊື້-ຂາຍລາຍການທ່ອງທ່ຽວ ຢູ່ ສປປ ລາວ | ເຊີນເອົາບັນດາບໍລິສັດທ່ອງທ່ຽວຈີນເຂົ້າມາຢ້ຽມຊົມຜະລິດຕະພັນ ແລະ ລາຍການທ່ອງທ່ຽວຂອງລາວ ແລະ ພົບປະກັບຫົວໜ່ວຍທຸລະກິດໃນຂະແໜງການທ່ອງທ່ຽວຂອງລາວ ເພື່ອເຮັດສັນຍາຊື້-ຂາຍ ລາຍການທ່ອງທ່ຽວ | 2023 | ສະຖານທີ່ທ່ອງທ່ຽວ ແລະ ຜະລິດຕະພັນການທ່ອງທ່ຽວໄດ້ຮັບການໂຄສະນາຢ່າງກວ້າງຂວາງ ແລະ ຫົວໜ່ວຍທຸລະກິດທ່ອງທ່ຽວຂອງລາວມີຄູ່ສັນຍາຊື້-ຂາຍລາຍການທ່ອງທ່ຽວ ແລະ ສັນຍາຮັບ-ສົ່ງນັກທ່ອງທ່ຽວ | ລັດຖະບານ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ<br>ພາກທຸລະກິດ |
| 10 | ການຈັດລາຍການລົງຢ້ຽມຢາມແຫຼ່ງທ່ອງທ່ຽວ FAMTRIP ສຳລັບນັກ | ເຊີນບັນດານັກຂຽນໂຄສະນາການທ່ອງທ່ຽວ Bloggers ແລະ ສື່ | 2023 | ຜ່ານການຂຽນຂ່າວ ແລະ ການອອກຂ່າວໂຄສະນາ | ລັດຖະບານ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ |

| ລ/ດ | ກິດຈະກໍາ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | ຂຽນໂຄສະນາການທ່ອງທ່ຽວ Blogger ແລະ ສື່ມວນຊົນຈີນ ເພື່ອຊ່ວຍໂຄສະນາການທ່ອງທ່ຽວ ຢູ່ ສປປ ລາວ | ມວນຊົນຂອງ ຈີນ ເພື່ອເຂົ້າມາຢ້ຽມຊົມ ສະຖານທີ່ທ່ອງທ່ຽວ ແລະ ຜະລິດຕະພັນການທ່ອງທ່ຽວ ຂອງ ລາວ ເພື່ອໄປໂຄສະນາຢູ່ຊ່ອງທາງຕ່າງໆ ຜ່ານສື່ມວນຊົນ ແລະ ສື່ສັງຄົມອອນລາຍຂອງຈີນ | | ການທ່ອງທ່ຽວ ຜ່ານສື່ຕ່າງໆ ຂອງ ສປ ຈີນ ຈະສາມາດເຂົ້າເຖິງຕະຫຼາດເປົ້າໝາຍໄດ້ຫຼາຍ, ກວ້າງໄກ ແລະ ໄວທີ່ສຸດ ຊຶ່ງຈະສາມາດຊ່ວຍດຶງດູດນັກທ່ອງທ່ຽວຈີນເຂົ້າມາທ່ຽວລາວຫຼາຍຂຶ້ນ | | ສື່ມວນຊົນຈີນ |
| 11 | ສ້າງວິດີໂອໂຄສະນາການທ່ອງທ່ຽວເປັນພາສາຈີນ ຄວາມຍາວ 3 ນາທີ | ຜະລິດວິດີໂອໂຄສະນາຜະລິດຕະພັນການທ່ອງທ່ຽວທີ່ໂດດເດັ່ນ ເປັນຕົ້ນແມ່ນ ສະຖານທີ່ທ່ອງທ່ຽວ, ອາຫານ ແລະ ວັດທະນະທຳອັນດີງາມຂອງລາວ ໂດຍການໂຄສະນາຜ່ານຊ່ອງທາງສື່ອອນລາຍທີ່ນັກທ່ອງທ່ຽວຈີນນິຍົມໃຊ້ ເຊັ່ນ: Wechat, Tiktok, Weibo | 2023 | ການໂຄສະນາການທ່ອງທ່ຽວລາວສາມາດເຂົ້າເຖິງກຸ່ມຕະຫຼາດນັກທ່ອງທ່ຽວຈີນໄດ້ຫຼາຍຂຶ້ນ ແລະ ນັກທ່ອງທ່ຽວຈີນຈະໄດ້ຮັບຮູ້ຂໍ້ມູນການທ່ອງທ່ຽວຂອງລາວ ສາມາດສ້າງຄວາມດຶງດູດໃຈໃນການເດີນທາງຫຼາຍຂຶ້ນ | ລັດຖະບານ ພາກທຸລະກິດ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ ພາກທຸລະກິດ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງ ປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| 12 | ຜະລິດສິ່ງພິມໂຄສະນາການທ່ອງທ່ຽວເປັນພາສາຈີນ | ຜະລິດແຜນທີ່ທ່ອງທ່ຽວປະເທດລາວ, ແຜນທີ່ທ່ອງທ່ຽວນະຄອນຫຼວງວຽງຈັນ, ແຜນທີ່ທ່ອງທ່ຽວຫຼວງພະບາງ, ແຜນທີ່ທ່ອງທ່ຽວເມືອງວັງວຽງ, ແຜນທີ່ທ່ອງທ່ຽວຊຽງຂວາງ, ແຜນທີ່ທ່ອງທ່ຽວຄຳມ່ວນ, ແຜນທີ່ທ່ອງທ່ຽວສະຫວັນນະເຂດ, ແຜນທີ່ທ່ອງທ່ຽວຈຳປາສັກ, ປື້ມງານບຸນເພນີ Laos Events and Festivals, ແຜ່ນພັບ Laos Highlight, ແຜ່ນພັບ Highlight ເມືອງທ່ອງທ່ຽວ ຫຼວງພະບາງ, ຜະລິດແຜ່ນພັບ Highlight ເມືອງ | 2023 | ນັກທ່ອງທ່ຽວຈີນຈະໄດ້ຮັບຮູ້ຂໍ້ມູນການທ່ອງທ່ຽວຫຼາຍຂຶ້ນ ແລະ ທັງເປັນການອຳນວຍຄວາມສະດວກ ແລະ ສາມາດສ້າງທາງເລືອກ ທີ່ໜ້າສົນໃຈ ໃຫ້ແກ່ນັກທ່ອງທ່ຽວໂດຍສະເພາະແມ່ນນັກທ່ອງທ່ຽວທີ່ມາທ່ຽວແບບອິດສະຫຼະ | ລັດຖະບານ ພາກທຸລະກິດ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ ພາກທຸລະກິດ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | ທ່ອງ ທ່ຽວວັງວຽງ, ແຜ່ນພັບ Highlight ເມືອງທ່ອງທ່ຽວ ຊຽງ ຂວາງ, ແຜ່ນພັບ Highlight ເມືອງ ທ່ອງທ່ຽວ ຄຳມ່ວນ, ແຜ່ນພັບ Highlight ເມືອງທ່ອງທ່ຽວຈຳປາ ສັກ, ສິ່ງທີ່ຄວນເຮັດ ແລະ ບໍ່ຄວນ ເຮັດ (Do and Don't in Laos). ເຄື່ອງທີ່ລະນຶກເຊັ່ນ: ເສື້ອ, ໝວກ, ຖົງຜ້າ, ພວງພະແຈ. | | | | |
| 13 | ຍົກລະດັບທັກສະຄວາມຮູ້ພະນັກ ງານສູນຂໍ້ມູນການທ່ອງທ່ຽວສູນກາງ ແລະ ທ້ອງຖິ່ນທາງດ້ານການບໍລິການ ນັກທ່ອງທ່ຽວ | ຈັດຝຶກອົບຮົມກ່ຽວກັບການບໍລິ ການສະໜອງຂໍ້ມູນຂ່າວສານການ ທ່ອງທ່ຽວ ໃຫ້ແກ່ນັກທ່ອງທ່ຽວໃຫ້ ໄດ້ມາດຕະຖານ ສຳລັບພະນັກງານ ປະຈຳສູນ ແລະ ຫ້ອງຂໍ້ມູນຂ່າວສານ ການທ່ອງທ່ຽວ | 2023 | ພະນັກງານປະຈຳສູນ ແລະ ຫ້ອງຂໍ້ມູນຂ່າວສານການທ່ອງ ທ່ຽວຈະສາມາດຍົກລະດັບ ແລະທັກສະໃນການສະໜອງ ຂໍ້ມູນໃຫ້ແກ່ນັກທ່ອງທ່ຽວ ຕອບສະໜອງໄດ້ຄວາມຕ້ອງ | ລັດຖະບານ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ<br>ພະແນກ ຖວທ ແຂວງ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງ ປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | | ການຂອງຕະຫຼາດເປົ້າໝາຍການທ່ອງທ່ຽວ ໂດຍສະເພາະແມ່ນຂັ້ນຕອນຂໍ້ມູນ ແລະ ວິທີການຕ່າງໆ | | |
| 14 | ຈັດເວທີສຳມະນາສົ່ງເສີມການທ່ອງທ່ຽວລາວ-ຈີນ | ຈັດສຳມະນາ ເພື່ອແລກປ່ຽນບົດຮຽນ ລະຫວ່າງພາກລັດ ແລະ ພາກເອກະຊົນ ກ່ຽວກັບການສົ່ງເສີມໂຄສະນາການທ່ອງທ່ຽວລາວ-ຈີນ | 2023 | ຜູ້ປະກອບການທຸລະກິດການທ່ອງທ່ຽວ ທີ່ຮັບນັກທ່ອງທ່ຽວຈີນຈະມີຄວາມເຂົ້າໃຈຕໍ່ກັບລະບຽບການ ແລະ ນະໂຍບາຍຕ່າງໆ ທາງດ້ານການທ່ອງທ່ຽວຫຼາຍຂຶ້ນ | ລັດຖະບານ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ ພາກທຸລະກິດ |

## 7. ແຜນກິດຈະກຳຕ້ອນຮັບນັກທ່ອງທ່ຽວຈີນ ສຳລັບປີ 2023-2025 (ໄລຍະກາງ)

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງ ປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **I** | **ການປັບປຸງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກໃນການເຂົ້າ-ອອກ** | | | | | |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| 1 | ປັບປຸງເສັ້ນທາງເຊື່ອມຕໍ່ລະຫວ່າງສະຖານີລົດໄຟ ຫາ ບັນດາຕົວເມືອງທ່ອງທ່ຽວ ແລະ ເສັ້ນທາງຫຼວງແຫ່ງຊາດ | ປັບປຸງບັນດາເສັ້ນທາງເຊື່ອມຕໍ່ຈາກສະຖານີລົດໄຟ ຫາ ຕົວເມືອງ, ນອກຈາກນັ້ນ ກໍປັບປຸງເສັ້ນທາງແຕ່ດ່ານສາກົນ-ຕົວເມືອງຕ່າງໆ | 2023-2025 | ການເດີນທາງສະດວກ, ວ່ອງໄວ, ນັກທ່ອງທ່ຽວໄດ້ໄປທ່ຽວຫຼາຍບ່ອນ, ໃຊ້ຈ່າຍຫຼາຍຂຶ້ນ ແລະ ນັກທ່ອງທ່ຽວມີຄວາມປະທັບໃຈ | ລັດຖະບານ ການຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງ ຍທຂ |
| 2 | ປັບປຸງເສັ້ນທາງເຂົ້າຫາແຫຼ່ງທ່ອງ | ປັບປຸງບັນດາເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວທ່ຽວບໍລິມະສິດຢູ່ບັນດາແຂວງ ຕາມເສັ້ນທາງລົດໄຟໃຫ້ສາມາດເດີນທາງໄດ້ສະດວກສະບາຍຕະຫຼອດປີ | 2023-2025 | ການເດີນທາງໄດ້ຮັບຄວາມສະດວກສະບາຍຫຼາຍຂຶ້ນ, ປອດໄພ, ນັກທ່ອງທ່ຽວມີຄວາມປະທັບໃຈ, ໃຊ້ຈ່າຍຫຼາຍຂຶ້ນ. | ລັດຖະບານ ການຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງ ຖວທ, ພະແນກ ຖວທ ບັນດາແຂວງ ແລະ ນະຄອນຫຼວງ. |
| 3 | ຕິດຕັ້ງປ້າຍຊີ້ບອກສະຖານທີ່ທ່ອງທ່ຽວ | ເພີ່ມພາສາຈີນໃສ່ປ້າຍຊີ້ບອກຢູ່ສະຖານທີ່ທ່ອງທ່ຽວທາງຕາມເສັ້ນທາງລົດໄຟ, ທາງຫຼວງແຫ່ງຊາດ ແລະ ສະຖານທີ່ທ່ອງທ່ຽວ (ພາສາລາວ, ຈີນ, ອັງກິດ) | 2023-2025 | ນັກທ່ອງທ່ຽວທີ່ເດີນທາງດ້ວຍພາຫະນະຕົນເອງສາມາດຮັບຮູ້ຂໍ້ມູນທີ່ຕັ້ງຂອງສະຖານທີ່ທ່ອງທ່ຽວ | ລັດຖະບານ ການຊ່ວຍເຫຼືອຈາກຕ່າງປະເທດ | ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| 4 | ໃຫ້ບູລິມະສິດໃນການອອກອະນຸຍາດໃຫ້ສາຍການບິນໃໝ່ທີ່ສົນໃຈໃນການເປີດຖ້ຽວບິນເຊື່ອມໂຍງລະຫວ່າງລາວ-ຈີນ | ຊຸກຍູ້ໃຫ້ມີເປີດສາຍການບິນໃໝ່ເຂົ້າມາ ສປປ ລາວ | 2023 | ເພີ່ມຄວາມອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວເດີນທາງເຂົ້າມາ ສປປ ລາວ | | ກະຊວງ ຍທຂ<br>ການບິນລາວ |
| 5 | ສ້າງຈູດແວ່ພັກເຊົາຢູ່ຕາມເສັ້ນທາງຫຼວງແຫ່ງຊາດ | ກຳນົດຈູດ ແລະ ສ້າງຈຸດແວ່ພັກເຊົາຢູ່ຕາມເສັ້ນທາງຫຼວງແຫ່ງຊາດໃນຈຸດທີ່ມີເງື່ອນໄຂ ແລະ ມີຄວາມເໝາະສົມ ແລະ ທັງເປັນບ່ອນຈຳໜ່າຍຜະລິດຕະພັນທ້ອງຖິ່ນ | 2023-2025 | - ເພີ່ມການອຳນວຍຄວາມສະດວກໃຫ້ແກ່ຜູ້ເດີນທາງສັນຈອນໄປມາ ແລະ ນັກທ່ອງທ່ຽວ<br>- ນັກທ່ອງທ່ຽວສາມາດຊື້ສິນຄ້າທ້ອງຖິ່ນ | ລັດຖະບານ<br>ການຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງ ຍທຂ<br>ກະຊວງ ອສຄ |
| 6 | ຈັດສັນບ່ອນຈອດລົດສຳລັບລົດທົວແບບນອນ - Motorhome | - ຈັດສັນບ່ອນຈອດລົດທີ່ມີສິ່ງອຳນວຍຄວາມສະດວກໃຫ້ແກ່ການບໍລິການ ເຊັ່ນ: ຫ້ອງນໍ້າ, ບ່ອນນັ່ງພັກຜ່ອນ ແລະ ບ່ອນແຕ່ງກິນ<br>- ພາກລັດເປັນຜູ້ຈັດສັນທີ່ດິນໃຫ້ | 2023-2025 | - ຕົວເມືອງມີຄວາມເປັນລະບຽບຮຽບຮ້ອຍ<br>- ເພີ່ມການອຳນວຍຄວາມສະດວກໃຫ້ແກ່ຜູ້ເດີນທາງສັນຈອນໄປມາ ໂດຍສະເພາະແມ່ນລົດທົວແບບ | ລັດຖະບານ | ພະແນກ ຍທຂ ແຂວງ<br>ພະແນກ ຖວທ ແຂວງ<br>ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | ແລະ ຣຽກການລົງທຶນຈາກພາກທຸລະກິດ ເພື່ອສ້າງສິ່ງອຳນວຍຄວາມສະດວກຕ່າງໆ<br>- ສ້າງລະບຽບໃນການຄຸ້ມຄອງສະເພາະສຳລັບລົດທົວແບບນອນ | | ນອນ - Motorhome | | |
| **II** | **ປັບປຸງສະຖານທີ່ທ່ອງທ່ຽວ ແລະ ຜະລິດຕະພັນການທ່ອງທ່ຽວ** | | | | | |
| 1 | ປັບປຸງສະຖານທີ່ທ່ອງທ່ຽວໃຫ້ໄດ້ມາດຕະຖານ | - ແຕ່ງຕັ້ງຄະນະກຳມະການຂັ້ນແຂວງ ແລະ ເມືອງ ລົງຕິດຕາມ ແລະ ປະເມີນແຕ່ລະສະຖານທີ່ທ່ອງທ່ຽວຢູ່ພາຍໃນແຂວງຂອງຕົນເອງ ໂດຍອີງຕາມມາດຕະຖານຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສປປ ລາວ<br>- ຊຸກຍູ້ປັບປຸງສະຖານທີ່ທ່ອງທ່ຽວໂດຍອີງຕາມເງື່ອນໄຂຂອງມາດຕະຖານຈັດລະດັບສະຖານທີ່ທ່ອງ | 2023-2025 | - ສະຖານທີ່ທ່ອງທ່ຽວມີຄວາມເປັນລະບຽບຮຽບຮ້ອຍ, ນັກທ່ອງທ່ຽວໄດ້ຮັບຄວາມປະທັບໃຈ<br>- ສະຖານທີ່ທ່ອງທ່ຽວໄດ້ຮັບການຈັດລະດັບດາວ ແລະ ຕິດປ້າຍດາວຢູ່ສະຖານທີ່ທ່ອງທ່ຽວ | ລັດຖະບານ, ພາກທຸລະກິດ, ການຊ່ວຍເຫຼືອຈາກຕ່າງປະເທດ | ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ, ພະແນກ ຖວທ ບັນດາແຂວງ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | ທ່ຽວຂອງ ສປປ ລາວ | | | | |
| 2 | ຕິດຕາມ ແລະ ກວດກາຄວາມອາດສາມາດໃນການຮອງຮັບຂອງແຕ່ລະສະຖານທີ່ທ່ອງທ່ຽວ ບໍ່ໃຫ້ແອອັດຈົນເກີນໄປ | ສົມທົບກັບບັນດາແຂວງ ຕິດຕາມຄວາມອາດສາມາດໃນການຮອງຮັບນັກທ່ອງທ່ຽວ ແລະ ຊອກຫາແນວທາງໃນການແກ້ໄຂ ໂດຍສະເພາະແມ່ນຄວາມແອອັດ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍຢູ່ແຕ່ລະສະຖານທີ່ທ່ອງທ່ຽວ | 2023-2024 | ສະຖານທີ່ທ່ອງທ່ຽວໂລ່ງລ່ຽນດີ, ບໍ່ມີຄວາມແອອັດ, ບໍ່ສົ່ງຜົນກະທົບຕໍ່ພາບພົດຄວາມສວຍງາມ ແລະ ຊັບພະຍາກອນການທ່ອງ ທ່ຽວ, ນັກທ່ອງທ່ຽວ ແລະ ເຈົ້າພາບ ມີຄວາມປະທັບໃຈ | ລັດຖະບານ, ພາກທຸລະກິດ | ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ |
| 3 | ສ້າງລາຍການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍໃຫ້ສາມາດຕອບສະໜອງກຸ່ມຕະຫຼາດເປົ້າໝາຍທັງພາຍໃນ ແລະ ປະເທດໃກ້ຄຽງ | ປະສານສົມທົບບັນດາສະມາຄົມໃນຂະແໜງການທ່ອງທ່ຽວ ເພື່ອຄັດເລືອກຜະລິດຕະພັນ, ສ້າງລາຍການ ແລະ ກຳນົດລາຄາການບໍລິການ | 2023 | ນັກທ່ອງທ່ຽວມີທາງເລືອກໃນການໃຊ້ບໍລິການ ແລະ ໄດ້ຮັບຄວາມເປັນທຳຫຼາຍຂຶ້ນ | ພາກທະກິດ | ພາກທຸລະກິດ |
| 4 | ສົ່ງເສີມການຜະລິດເຄື່ອງທີ່ລະນຶກ | ສົ່ງເສີມການສ້າງຜະລິດຕະພັນ ODOP ຂອງແຕ່ລະທ້ອງຖິ່ນ | 2023-2025 | ມີຜະລິດຕະພັນເຄື່ອງທີ່ລະນຶກທີ່ເປັນເອກະລັກ, ຫຼາກຫຼາຍ ແລະ ນັກທ່ອງທ່ຽວສາມາດເລືອກຊື້ ເພື່ອເປັນ | ລັດຖະບານ, ພາກທຸລະກິດ | - ກະຊວງອຸດສະຫາກຳ ແລະ ການຄ້າ<br>- ພາກທຸລະກິດ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | | ຂອງຝາກຂອງຕ້ອນປະຊາຊົນມີລາຍຮັບຈາກການຜະລິດຈາກການຜະລິດ ແລະ ຈຳໜ່າຍເຄື່ອງທີ່ລະນຶກ | | |
| 5 | ປັບປຸງປ້າຍຂໍ້ມູນປະຫວັດຂອງສະຖານທີ່ທ່ອງທ່ຽວ (ເພີ່ມພາສາຈີນ) ຢູ່ບັນດາແຫຼ່ງທ່ອງທ່ຽວທີ່ສຳຄັນຕ່າງໆ | ຄັດເລືອກບັນດາສະຖານທີ່ທ່ອງທ່ຽວທີ່ເຫັນວ່າມີນັກທ່ອງທ່ຽວຈີນໄປທ່ຽວຊົມ ແລະ ແປຂໍ້ມູນຕ່າງໆເປັນພາສາຈີນ ເຊັ່ນ: ປະຫວັດຄວາມເປັນມາ, ລະບຽບໃນການເຂົ້າຊົມ ແລະ ອື່ນໆ | 2023 | ນັກທ່ອງທ່ຽວຈີນຈະໄດ້ຮັບຮູ້ຂໍ້ມູນປະຫວັດຂອງສະຖານທີ່ທ່ຽວຫຼາຍຂຶ້ນ ແລະ ຈະເພີ່ມຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ໂດຍສະເພາະແມ່ນນັກທ່ອງທ່ຽວທີ່ມາທ່ຽວແບບອິດສະຫຼະ | ລັດຖະບານ, ພາກທຸລະກິດ | ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ພາກທຸລະກິດ |
| 6 | ບັນດາຫົວໜ່ວຍທຸລະກິດຕ່າງໆສ້າງປ້າຍຊີ້ບອກເປັນພາສາຈີນ ເພື່ອອຳນວຍຄວາມສະດວກໃນການສື່ສານໃຫ້ແກ່ນັກທ່ອງທ່ຽວ | ເພີ່ມພາສາຈີນເຂົ້າໃນລາຍການອາຫານ, ຕິດປ້າຍລະຫັດ WiFi ຜ່ານ QR Code, ຂຽນປະໂຫຍກທີ່ຈຳເປັນ ພາສາຈີນ ເຊັ່ນ: ຫ້ອງນໍ້າ, ຈ່າຍເງິນສົດ... | 2023 | ສາມາດອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວໄດ້ | ພາກທະລະກິດ | ພາກທຸລະກິດ (ຜູ້ປະກອບການທຸລະກິດທ່ອງທ່ຽວ) |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| 7 | ຄັດເລືອກ ແລະ ນຳໃຊ້ລະບົບແປພາສາແບບເອເລັກໂຕຣນິກ | ຝຶກອົບຮົມໃຫ້ພະນັກງານໃນການນຳໃຊ້ລະບົບແປພາສາທາງເອເລັກໂຕຣນິກ ເຊັ່ນ: Google Translate, Microsoft Translate | 2023 | ນັກທ່ອງທ່ຽວມີທາງເລືອກ ແລະ ໄດ້ຮັບຄວາມສະດວກສະບາຍໃນການສື່ສານຫຼາຍຂຶ້ນ | ພາກທຸລະກິດ | ພາກທຸລະກິດ |
| 8 | ຊຸກຍູ້ການຊຳລະຄ່າໃຊ້ຈ່າຍຜ່ານທາງລະບົບເອເລັກໂຕຣນິກ ເຊັ່ນ: ແອັບ Alipay, WeChat Pay, and Union Pay | ຊຸກຍູ້ໃຫ້ບັນດາຫົວໜ່ວຍທຸລະກິດການທ່ອງທ່ຽວ, ນັກທ່ອງທ່ຽວ ສຳລະຜ່ານຜູ້ໃຫ້ບໍລະການທີ່ໄດ້ຮັບຖືກຕ້ອງຕາມກົດໝາຍ ເພື່ອປ້ອງກັນບໍ່ໃຫ້ຖືກສໍ້ໂກງ | 2023 | ນັກທ່ອງທ່ຽວມີຄວາມສະດວກໃນການຊຳລະຄ່າໃຊ້ຈ່າຍຕ່າງໆ ການສຳລະເງິນຕາເປັນລະບົບ | | ທະນາຄານ, ພາກທຸລະກິດ |
| 9 | ກຳນົດຈຸດເຕີມນໍ້າຮ້ອນ/ເຢັນ ສຳລັບນັກທ່ອງທ່ຽວ | ຊຸກຍູ້ໃຫ້ບັນດາຜູ້ປະກອບການຕິດຕັ້ງຈຸດເຕີມນໍ້າດື່ມ (ຮ້ອນ/ເຢັນ) ຢູ່ບັນດາສະຖານທີ່ທ່ອງທ່ຽວ, ສະຖານທີ່ພັກ, ຮ້ານອາຫານ, ຮ້ານຂາຍເຄື່ອງທີ່ລະນຶກ | 2023 | ນັກທ່ອງທ່ຽວໄດ້ຮັບຄວາມອຳນວຍຄວາມສະດວກ, ມີຄວາມປະທັບໃຈ. ນອກຈາກນັ້ນ ຍັງເປັນການຫຼຸດຜ່ອນການນຳໃຊ້ນໍ້າດື່ມທີ່ເປັນຕຸກປຣາສຕິກ, ຫຼຸດຜ່ອນບັນຫາຂີ້ເຫຍື້ອຕາມຕົວເມືອງ | ພາກທຸລະກິດ | ພາກທຸລະກິດ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| 10 | ປັບປຸງຄຸນນະພາບຂອງສະຖານທີ່ພັກແຮມ, ຮ້ານອາຫານ, ຮ້ານສະປາ | - ແຕ່ງຕັ້ງຄະນະກຳມະການໃນການລົງຊຸກຍູ້ ແລະ ຕິດຕາມກວດກາການດຳເນີນງານຂອງພາກທຸລະກິດ<br>- ຊຸກຍູ້ໃຫ້ຫົວໜ່ວຍທຸລະກິດປັບປຸງການບໍລິການ ແລະ ສິ່ງອຳນວຍຄວາມສະດວກໃຫ້ມີຄວາມສະອາດ | 2023-2025 | ນັກທ່ອງທ່ຽວໄດ້ຮັບການບໍລິການດີ, ມີຄວາມປະທັບໃຈ ແລະ ສິ່ງອຳນວຍຄວາມດວກມີຄວາມສະອາດ, ມີຄວາມເປັນລະບຽບຮຽບຮ້ອຍ | ລັດຖະບານ<br>ພາກທຸລະກິດ | ກະຊວງ ຖວທ<br>ກະຊວງການເງິນ<br>ກະຊວງ ປກສ<br>ສະມະຄົມທຸລະກິດທ່ອງທ່ຽວ, ສະມາຄົມໂຮງແຮມ ແລະ ຮ້ານອາຫານລາວ<br>ພະແນກ ຖວທ ແຂວງ |
| **III** | **ການຄຸ້ມຄອງການທ່ອງທ່ຽວ** | | | | | |
| 1 | ຕິດຕາມກວດກາການດຳເນີນທຸລະກິດຂອງຜູ້ປະກອບການທີ່ເຫັນວ່າມີຄວາມສ່ຽງກັບການບໍລິການທົວແບບສູນຫຼຽນ. | - ປະສານງານກັບກະຊວງວັດທະນະທຳ ແລະ ທ່ອງທ່ຽວຈີນ ເພື່ອສ້າງແຜນການຮ່ວມມືໃນກໍລະນີພົບເຫັນການເຄື່ອນໄຫວທົວແບບສູນຫຼຽນ<br>- ສ້າງລະບຽບການໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ | 2023-2025 | ບັນຫາການເຄື່ອນໄຫວທຸລະກິດທົວສູນຫຼຽນຫຼຸດລົງຢູ່ໃນ ສປປ ລາວ ແລະ ສາມາດຄວບຄຸມການທ່ອງທ່ຽວໄດ້ດີຂຶ້ນ ແລະ ສາມາດເກັບລາຍຮັບໄວ້ພາຍໃນປະ ເທດ. | ລັດຖະບານ | ກົມຄຸ້ມຄອງທຸລະກິດ, ກະຊວງ ຖວທ ການທ່ອງທ່ຽວ, ກົມຕຳຫຼວດທ່ອງທ່ຽວ, ກະຊວງ ປກສ, ສະມະຄົມທຸລະກິດທ່ອງທ່ຽວ, ສະມາຄົມພະນັກງານນຳທ່ຽວ, ສະມາຄົມໂຮງແຮມ ແລະ ຮ້ານອາຫານລາວ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| 2 | ຕິດຕາມ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ | ລົງຕິດຕາມກວດກາ ແລະ ແກ້ໄຂບັນຫາການສໍ້ໂກງລາຄາ, ຄວາມບໍ່ເປັນລະບຽບຢູ່ສະຖານທີ່ທ່ອງທ່ຽວ, ສະຖານບັນເທີງ ແລະ ອື່ນໆ | 2023-2025 | ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ນັກທ່ອງທ່ຽວບໍ່ຖືກສໍ້ໂກງ | ລັດຖະບານ | ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງ ຖວທ<br>ກະຊວງ ປ້ອງກັນຄວາມສະຫງົບ<br>ພະແນກ ຖວທ ແຂວງ ແລະ ນະຄອນຫຼວງ |
| 3 | ເຜີຍແຜ່ ແລະ ຈັດຕັ້ງປະຕິບັດບັນດານິຕິກຳການທ່ອງທ່ຽວໃຫ້ມີຄວາມເປັນເອກະພາບກັນ | - ຈັດຕັ້ງປະຕິບັດບັນດານິຕິກຳທີ່ມີແລ້ວຢ່າງເຂັ້ມງວດ ແລະ ມີຄວາມເປັນເອກະພາບກັນທົ່ວປະເທດ<br>- ປັບປຸງນິຕິກຳໃຫ້ແທດເໝາະກັບສະພາບການໃນປັດຈຸບັນ ແລະ ໃນອະນາຄົດ | 2023-2025 | ການຄຸ້ມຄອງທຸລະກິດການທ່ອງທ່ຽວມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ | ລັດຖະບານ | ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ, ກະຊວງ ຖວທ |
| **IV** | **ການໂຄສະນາການທ່ອງທ່ຽວ** | | | | | |
| 1 | ການໂຄສະນາແຫຼ່ງທ່ອງທ່ຽວ ແລະ ຜະລິດຕະພັນການທ່ອງທ່ຽວໃໝ່ ຜ່ານສື່ສັງຄົມອອນລາຍ ເປັນພາສາ | ຂຽນເນື້ອໃນ ແລະ ໂຄສະນາຮູບພາບ, ວິດີໂອສັ້ນ, ສະຖານທີ່ທ່ອງທ່ຽວ, ກິດຈະກຳການທ່ອງທ່ຽວ, | 2024-2025 | ນັກທ່ອງທ່ຽວຈີນ ຈະສາມາດເຂົ້າເຖິງຂໍ້ມູນຂ່າວສານການທ່ອງທ່ຽວລາວ ໄດ້ຫຼາຍຊ່ອງ | ລັດຖະບານ | ກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | ຈີນ | ຜະລິດຕະພັນການທ່ອງທ່ຽວ ແລະ ອື່ນໆ ໂພດລົງໂຄສະນາຢູ່ສື່ສັງຄົມອອນລາຍ ທີ່ນັກທ່ອງທ່ຽວຈີນສາມາດເຂົ້າເຖິງໄດ້ຫຼາຍທີ່ສຸດ | | ທາງ, ສະດວກ ແລະ ສາມາດຕັດສິນໃຈ ມາທ່ຽວລາວ ນັບມື້ນັບຫຼາຍຂຶ້ນ | | |
| **V** | **ພັດທະນາບຸກຄະລາກອນ** | | | | | |
| 1 | ຝຶກອົບຮົມ ແລະ ຍົກລະດັບທັກສະການບໍລິການໃຫ້ແກ່ຜູ້ປະກອບການທຸລະກິດ ແລະ ພະນັກງານໃຫ້ບໍລິການ | ຈັດຝຶກອົບຮົມໃຫ້ແກ່ຜູ້ປະກອບການທຸລະກິດ ແລະ ພະນັກງານກ່ຽວກັບການຕ້ອນຮັບນັກທ່ອງທ່ຽວໂດຍສະເພາະແມ່ນນັກທ່ອງທ່ຽວຈີນ (ສະຖານທີ່ພັກແຮມ, ຮ້ານອາຫານ, ສະປາ...) | 2023-2025 | ຜູ້ປະກອບການທຸລະກິດ ແລະ ພະນັກງານໄດ້ຮັບຂໍ້ມູນ ແລະ ມີຄວາມເຂົ້າໃຈຕໍ່ກັບການໃຫ້ບໍລິການແກ່ນັກທ່ອງທ່ຽວຈີນຫຼາຍຂຶ້ນ | ລັດຖະບານ ການຊ່ວຍເຫຼືອຈາກຕ່າງປະເທດ | ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ |
| 2 | ຝຶກອົບຮົມພະນັກງານນຳທ່ຽວພາສາຈີນ ແລະ ຝຶກອົບຮົມພາສາຈີນໃຫ້ແກ່ພະນັກງານໃນຂະແໜງການທ່ອງທ່ຽວ | ຮ່ວມມືກັບສະຖາບັນການສຶກສາ ເພື່ອຊຸກຍູ້ໃຫ້ຜູ້ທີ່ສາມາດເວົ້າພາສາຈີນໄດ້ເຂົ້າມາເຮັດວຽກໃນຂະແໜງການທ່ອງທ່ຽວ | 2023-2025 | - ມີຫຼັກສູດຝຶກອົບຮົມພະນັກງານນຳທ່ຽວໄລຍະສັ້ນ<br>- ຈຳນວນພະນັກງານນຳທ່ຽວ | ລັດຖະບານ ການຊ່ວຍເຫຼືອຈາກຕ່າງປະເທດ | ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ ສະຖານບັນການສຶກສາ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | | ພາສາຈີນ ແລະ ພະນັກງານໃຫ້ບໍລິການທີ່ສາມາດເວົ້າພາສາຈີນໄດ້ມີຈຳນວນເພີ່ມຫຼາຍຂຶ້ນ | | |
| 3 | ສ້າງຂະບວນການປຸກຈິດສຳນຶກແລະສົ່ງເສີມໃຫ້ນັກສຶກສາສົນໃຈສຶກສາຮ່ຳຮຽນໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມໃຫ້ຫຼາຍຂຶ້ນ | ຈັດຕັ້ງປະຕິບັດສ້າງຂະບວນການປຸກຈິດສຳນຶກ ແລະ ສົ່ງເສີມໃຫ້ນັກສຶກສາສົນໃຈສຶກສາຮ່ຳຮຽນໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມໃຫ້ຫຼາຍຂຶ້ນ | 2023-2025 | ຈຳນວນແຮງງານໃນອຸດສະຫາກຳການທ່ອງທ່ຽວຈະເພີ່ມຂຶ້ນ ແລະ ມີຄວາມຍືນຍົງໃນໄລຍະຍາວ | | - ສະຖາບັນສິ່ມອນຊິນ, ວັດທະນະທຳ ແລະ ທ່ອງທ່ຽວ<br>- ກະຊວງສຶກສາທິການ ແລະ ກິລາ<br>- ພາກທຸລະກິດ |
| 4 | ສົ່ງເສີມໃຫ້ແຮງງານເຂົ້າມາເຮັດວຽກໃນຂະແໜງການທ່ອງທ່ຽວໃຫ້ຫຼາຍຂຶ້ນ ແລະ ຝຶກຝົນໃຫ້ເປັນພະນັກງານທີ່ມີຄຸນນະພາບ | **ໄລຍະສັ້ນ:** ເພີ່ມຄ່າແຮງງານ (ເງິນເດືອນ), ປັບປຸງຊົ່ວໂມງໃນການເຮັດວຽກໃຫ້ເໝາະສົມ ເພື່ອດຶງດູດຄວາມສົນໃຈຂອງພະນັກງານ<br>**ໄລຍະກາງ:** ໃຫ້ໂອກາດແກ່ນັກສຶກສາເຂົ້າມາເຮັດວຽກຝຶກງານ (ເຮັດວຽກເສີມ) | 2023-2025 | ສ້າງກຳລັງແຮງງານ ແລະ ແກ້ໄຂແຮງງານຄາດແຄນໃນອະນາຄົດ | ພາກທຸລະກິດ | ພາກທຸລະກິດ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| **VI** | **ການຮັກສາຄວາມສະຫງົບ ແລະ ຄວາມປອດໄພທາງດ້ານສຸຂະພາບ** | | | | | |
| 1 | ເພີ່ມທະວີການຮັກສາຄວາມປອດໄພຢູ່ຕາມຕົວເມືອງທ່ອງທ່ຽວໃຫ້ມີຄວາມສະຫງົບ ແລະ ປອດໄພ | - ນຳໃຊ້ລະບົບເຄື່ອງມືທີ່ທັນສະໃໝໃນການຕິດຕໍ່ສື່ສານ (ເບີຕິດຕໍ່ສາຍດ່ວນ) ໂດຍມີລະບົບພາສາຈີນເພື່ອຮອງຮັບກັບບັນຫາທີ່ອາດຈະເກີດຂຶ້ນກັບນັກທ່ອງທ່ຽວ<br>- ກຳນົດຈຸດຮັບຄຳຮ້ອງຮຽນຈາກນັກທ່ອງທ່ຽວຢູ່ຕົວເມືອງທ່ອງທ່ຽວ ຫຼື ເຂດທີ່ມີຄວາມເໝາະສົມທີ່ນັກທ່ອງທ່ຽວສາມາດເຂົ້າເຖິງໄດ້ສະດວກ ແລະ ແກ້ໄຂບັນຫາໃຫ້ທັນສະພາບການ | 2023 | ເຮັດໃຫ້ນັກທ່ອງທ່ຽວຮູ້ສຶກປອດໄພ ແລະ ມີຄວາມປະທັບໃຈຕໍ່ການທ່ອງທ່ຽວລາວ | ລັດຖະບານ | ກະຊວງປ້ອງກັນຄວາມສະຫງົບ |
| 2 | ຊຸກຍູ້ການສັກຢາປ້ອງກັນພະຍາດໂຄວິດ-19 ເຂັມກະຕຸ້ນໃຫ້ແກ່ພະນັກງານໃນອຸດສະຫາກຳການທ່ອງທ່ຽວ | ຈັດສັນວັກຊິນໃຫ້ພຽງພໍ ແລະ ຊຸກຍູ້ໃຫ້ພະນັກງານໃນອຸດສະຫາກຳການທ່ອງທ່ຽວໃຫ້ໄປສັກຢາເຂັມກະຕຸ້ນ | 2023-2025 | ພະນັກງານໃນອຸດສະຫາກຳການທ່ອງທ່ຽວຈະມີພູມຄຸ້ມກັນທີ່ສູງຂຶ້ນ ແລະ ນັກທ່ອງທ່ຽວກໍຈະມີຄວາມຮູ້ສຶກ | ລັດຖະບານ | ກະຊວງສາທາລະນະສຸກ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | | ປອດໄພທີ່ພະນັກງານໃຫ້ບໍລິການໄດ້ຮັບການສັກຢາປ້ອງກັນພະຍາດແລ້ວ | | |
| 3 | ເຝົ້າລະວັງຕິດຕາມສະພາບການແຜ່ລະບາດຂອງພະຍາດໂຄວິດ-19 | ສຸ່ມກວດຫາເຊື້ອພະຍາດໃນກໍລະນີທີ່ເຫັນວ່າມີຄວາມສ່ຽງ | 2023-2025 | ນັກທ່ອງທ່ຽວຈະໄດ້ການກວດຫາເຊື້ອພະຍາດກ່ອນທີ່ຈະກັບຄືນປະເທດ ປະຊາຊົນໄດ້ຮັບຮູ້ສະຖານະການ ແລະ ຂໍ້ມູນທີ່ສຳຄັນກ່ຽວກັບການລະບາດຂອງພະຍາດ | ລັດຖະບານ | ກະຊວງສາທາລະນະສຸກ |
| 4 | ຈັດສັນອຸປະກອນກວດຫາເຊື້ອ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງການກວດຫາເຊື້ອພະຍາດ | ກຳນົດຈຸດກວດຫາເຊື້ອພະຍາດຢູ່ບັນດາເມືອງໃຫຍ່ຕ່າງໆທີ່ມີນັກທ່ອງທ່ຽວຫຼາຍ ຊຶ່ງສາມາດກວດຫາເຊື່ອໄດ້ແບບໄວ | 2023-2025 | ນັກທ່ອງທ່ຽວຈະໄດ້ຮັບຄວາມສະດວກສະບາຍໃນການເຂົ້າເຖິງສິ່ງອຳນວຍຄວາມສະດວກໃນການກວດຫາເຊື່ອພະຍາດ ແລະ ປິ່ນປົວ | ລັດຖະບານ | ກະຊວງສາທາລະນະສຸກ |

| ລ/ດ | ກິດຈະກຳ | ວິທີການຈັດຕັ້ງປະຕິບັດ | ໄລຍະຈັດຕັ້ງປະຕິບັດ | ຕົວຊີ້ບອກ | ແຫຼ່ງງົບປະມານ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| 5 | ກະກຽມວັກຊີນ ແລະ ຢາສຳລັບປິ່ນປົວພະຍາດໂຄວິດ 19 | ຮັບປະກັນມີວັກຊີນ ແລະ ຢາພຽງພໍສຳລັບການປິ່ນປົວພະຍາດໂຄວິດໃນກໍລະນີມີການຕິດເຊື້ອ | 2023-2025 | ນັກທ່ອງທ່ຽວສາມາດຮັບວັກຊີນ ແລະ ໄດ້ຮັບການປິ່ນປົວພະຍາດໂຄວິດ 19 | ລັດຖະບານ | ກະຊວງສາທາລະນະສຸກ |
| 6 | ກຳນົດສະຖານທີ່ຮອງຮັບກໍລະນີນັກທ່ອງທ່ຽວຕິດເຊື້ອ | ກຳນົດກົນໄກການຮັບມືກັບຜູ້ຕິດເຊື້ອ (ການເຄື່ອນຍ້າຍ, ການປິ່ນປົວ ແລະ ຄ່າບໍລິການ) ກໍລະນີນັກທ່ອງທ່ຽວຕິດເຊື້ອ ສຳລັບຄ່າໃຊ້ຈ່າຍແມ່ນນັກທ່ອງທ່ຽວຮັບຜິດຊອບເອງ | 2023-2025 | ນັກທ່ອງທ່ຽວໄດ້ຮັບການເອົາໃຈໃສ່, ມີຄວາມຮູ້ສຶກປອດໄພ ແລະ ມີຄວາມປະທັບໃຈ | ລັດຖະບານ | ກະຊວງສາທາລະນະສຸກ |